<u>ມະຫາວິທະຍາໄລແຫ່ງຊາດ</u>

<u>ຄະນະກະເສດສາດ</u>

<u>ວິທະຍາເຂດນາບົງ</u>

<u>ພາກວິຊາປູກຝັງ</u>


# ບົດໂຄງການຈົບຊັ້ນ

<u>ເລື່ອງ</u>

# ສຶກສາຊີວິດການເປັນຢູ່ຂອງປະຊາຊົນພາຍຫຼັງທີ່ມີການສຳປະທານທີ່ດິນ ທີ່ບ້ານປະຈຸດອນ ແລະ ບ້ານພໍ່ເບີຍ ເມືອງຕະໂອ້ຍ, ແຂວງ ສາລະວັນ

# Study on People Livelihood after Land concession in Pachudone and Porbeu Villages of Taoy District, Salavan Province


<u>ໂດຍ:</u> ທ້າວ ຄຳໃບ ໄຊຍະລາດ

..............................................

ນາງ ມະນີວັນ ພິມພັກດີ

..............................................

<u>ຊີ້ນຳໂດຍ:</u> ຮສ. ສົມພັນ ປາຊູວາງ

..............................................

<u>ພາກວິຊາປູກຝັງ</u>


..............................................

2011

# ບົດຄັດຫຍໍ້


ການສຶກສາໃນຄັ້ງນີ້ ແມ່ນສຶກສາໃນເລື່ອງຊີວິດການເປັນຢູ່ຂອງປະຊາຊົນພາຍຫຼັງທີ່ມີການສຳປະທານທີ່ດິນຢູ່ທີ່ ບ້ານປະຈຸດອນ ແລະ ບ້ານພໍ່ເບີຍ ເມືອງຕະໂອ້ຍ ແຂວງສາລະວັນ ໂດຍມີຈຸດປະສົງ ເພື່ອສຶກສາສະພາບການສຳປະທານທີ່ດິນໃນເຂດ ບ້ານປະຈຸດອນ ແລະ ບ້ານພໍ່ເບີຍ, ເພື່ອສຶກສາປັດໄຈຕ່າງໆທີ່ມີຜົນກະທົບຕໍ່ການດຳລົງຊີວິດຂອງປະຊາຊົນໃນເຂດທີ່ສຶກສາ ແລະ ເພື່ອສຶກສາການປ່ຽນແປງທາງດ້ານຮູບແບບການຜະລິດກະສິກຳຂອງປະຊາຊົນ ເພື່ອເປັນທິດທາງໃນການແກ້ໄຂບັນຫາຂອງການສົ່ງເສີມ ແລະ ການພັດທະນາໃຫ້ມີຄວາມເໝາະສົມກັບຄວາມຕ້ອງການຂອງປະຊາຊົນ ແລະ ສະພາບຄວາມເປັນຈິງຂອງທ້ອງຖິ່ນດັ່ງກ່າວ.

ການສຶກສາໄດ້ດຳເນີນຢູ່ໃນ 2 ບ້ານຄື: ບ້ານປະຈຸດອນ ແລະ ບ້ານພໍ່ເບີຍ ເມືອງຕະໂອ້ຍ ແຂວງສາລະວັນ ຈຳນວນຕົວຢ່າງທີ່ສຳພາດມີທັງໝົດແມ່ນ 60 ຄອບຄົວ, ການສຳພາດແມ່ນໄດ້ສຳພາດເອົາພຽງແຕ່ 32% ຂອງບ້ານເປົ້າໝາຍ.

ການສຶກສາເກັບກຳຂໍ້ມູນໃນໄລຍະ 2 ເດືອນ ແມ່ນໄດ້ສຶກສາຂໍ້ມູນ ໂດຍການສຳພາດ, ການເດີນສຳຫຼວດ ແລະ ການສັງເກດຕົວຈິງພົບວ່າ:

ການສຳປະທານທີ່ດິນທີ່ຖືກດິນຂອງປະຊາຊົນຕ່ຳສຸດແມ່ນ 0,42 ha ແລະ ສູງສຸດແມ່ນ 4 ha, ການສຳປະທານເຮັດໃຫ້ເນື້ອທີ່ໄຮ່ຫຼຸດລົງ 9,17%, ເນື້ອທີ່ນາເພີ່ມຂຶ້ນ 27,41%, ແລະ ເນື້ອທີ່ສວນເພີ່ມຂຶ້ນ 75,51%, ນອກຈາກນີ້ ຍັງເຮັດໃຫ້ສະພາບແວດລ້ອມມີການປ່ຽນແປງເຊັ່ນວ່າ: ນ້ຳທຳມະຊາດບົກແຫ້ງເຖິງ 51,66%, ເກີດໄພແຫ້ງແລ້ງ 30%, ໄຟໃໝ້ປ່າ 6,66%, ເກີດມີນ້ຳຖ້ວມ 70%, ມີລົມພາຍຸ 68,33% ແລະ ສະພາບແວດລ້ອມມີການປ່ຽນແປງເຖິງ 80%.

ໃນປະຈຸບັນຊາວກະສິກອນ ແມ່ນມີອາຊີບເຮັດໄຮ່ແບບໝູນວຽນເປັນຫຼັກ, ເກັບເຫຼັກ ແລະ ຫາເຄື່ອງປ່າຂອງດົງເປັນອາຊີບເສີມ, ເຂົາເຈົ້າມີລາຍຮັບຕ່ຳສຸດແມ່ນ 105.500 ກີບ/ປີ, ລາຍຮັບສູງສຸດແມ່ນ 5.750.000 ກີບ/ປີ, ລາຍຮັບສະເລ່ຍຕໍ່ຫົວຄົນ 331.233 ກີບ/ຄົນ/ປີ, ລາຍຈ່າຍຕ່ຳສຸດ 150.000 ກີບ/ປີ, ລາຍຈ່າຍສະເລ່ຍທັງໝົດ 1.534.166 ກີບ/ປີ.

ຈຳນວນຄອບຄົວເຂົ້າກຸ້ມກິນ 1 - 3 ເດືອນ ມີ 35 ຄອບຄົວ (58,33%), ເຂົ້າກຸ້ມກິນ 4 - 7 ເດືອນ ມີ 19 ຄອບຄົວ (31,67%) ແລະ ກຸ້ມກິນຫຼາຍກວ່າ 7 ເດືອນ ມີ (10%) ຂອງຈຳນວນຄອບຄົວທີ່ເກັບກຳຂໍ້ມູນ.

# ຄຳຂອບໃຈ

ຜົນສຳເລັດຂອງການລົງສຶກສາ ຊີວິດການເປັນຢູ່ຂອງປະຊາຊົນພາຍຫຼັງທີ່ມີການສຳປະທານທີ່ດິນ ຂອງພວກຂ້າພະເຈົ້າໃນຄັ້ງນີ້ແມ່ນມີຄວາມສຳຄັນຫຼາຍ ເຊິ່ງຜົນໄດ້ຮັບເຮັດໃຫ້ຮຽນຮູ້ເຖິງປະສົບການອັນໃໝ່ໆ ແລະ ສາມາດຖອດຖອນບົດຮຽນ ແລ້ວຍັງເຮັດໃຫ້ບົດລາຍງານທ້າຍການສຶກສາເຫຼັ້ມນີ້ໄດ້ຮັບຜົນສຳເລັດຕາມຄາດໝາຍ, ຜົນສຳເລັດດັ່ງກ່າວແມ່ນໄດ້ຮັບການຊ່ວຍເຫຼືອ ແລະ ຊີ້ນຳຈາກຄູອາຈານ ຄະນະກະເສດສາດ, ເອື້ອຍ - ອ້າຍພະນັກງານສູນຄົ້ນຄວ້າ ແລະ ຂໍ້ມູນຂ່າວສານທີ່ດິນ ແລະ ຊັບພະຍາກອນທຳມະຊາດ, ອຳນາດການປົກຄອງ ພ້ອມທັງພໍ່ແມ່ປະຊາຊົນ ບ້ານປະຈຸດອນ ແລະ ບ້ານພໍ່ເບີຍ ສະນັ້ນ ພວກຂ້າພະເຈົ້າຂໍສະແດງຄວາມຂອບໃຈ ແລະ ຄວາມຮູ້ບຸນຄຸນຢ່າງລົ້ນເຫຼືອມາຍັງ:

ຂໍຂອບໃຈ ທ່ານ ນ. ຄຳຫຼ້າ ພຸດທະລາດ ຫົວໜ້າ ໂຄງການເຄືອຂ່າຍຂໍ້ມູນທີ່ດິນ ແລະ ຊັບພະຍາກອນທຳມະຊາດ ທີ່ໃຫ້ການສະໜັບສະໜູນດ້ານງົບປະມານໃນການສຶກສາຄັ້ງນີ້ຈົນສຳເລັດໄດ້ດ້ວຍດີ.

ຂໍຂອບໃຈ ທ່ານ ຮສ. ສົມພັນ ປາຊູວາງ ຮອງຄະນະບໍດີ ຄະນະກະເສດສາດ ເຊິ່ງເປັນອາຈານທີ່ປຶກສາ ໃນການສຶກສາຄັ້ງນີ້ທ່ານໄດ້ຊີ້ທິດເຍືອງທາງໃນການລົງສຶກສາ ແລະ ກວດແກ້ບົດແຕ່ຕົ້ນຕະຫຼອດປາຍຈົນສຳເລັດ.

ຂໍຂອບໃຈ ທ່ານ ເອກວິໄນ ໄຊຍະລາດ ຮອງຫົວໜ້າ ສູນຄົ້ນຄ້ວາ ແລະ ຂໍ້ມູນຂ່າວສານທີ່ດິນ ແລະ ຊັບພະຍາກອນທຳມະຊາດ ພ້ອມຄະນະທີ່ໄດ້ໃຫ້ຄຳປຶກສາ ແລະ ຄຳແນະນຳທີ່ດີໃນການຂຽນບົດຄັ້ງນີ້ຈົນສຳເລັດ.

ຂໍຂອບໃຈນຳຫ້ອງການກະສິກຳ ແລະ ຫົວໜ້າຫ້ອງການພ້ອມດ້ວຍພະນັກງານທີ່ດິນເມືອງ ແລະ ພະນັກງານທີ່ດິນແຂວງສາລະວັນ ທີ່ອຳນວຍຄວາມສະດວກພ້ອມທັງຊ່ວຍເຫຼືອໃນການໃຫ້ຂໍ້ມູນມືສອງ.

ຂໍຂອບໃຈ ທ່ານ ວິເສດ ຈັນທະສອນ ທີ່ເປັນຜູ້ຊີ້ນຳພາກສະໜາມໃນການສຶກສາຈົນໄດ້ຮັບຜົນສຳເລັດຕາມຄາດໝາຍທີ່ວາງໄວ້.

ຂໍສະແດງຄວາມຮູ້ບຸນຄຸນມາຍັງ ຄະນະບໍດີ ຄະນະກະເສດສາດ, ບັນດາຄູອາຈານ, ໝູ່ເພື່ອນ ແລະ ຄອບຄົວ ທີ່ໃຫ້ຄຳຄິດເຫັນຕ່າງໆຈົນປະສົບຜົນສຳເລັດໄດ້ຕາມຄາດໝາຍ.

ສຸດທ້າຍນີ້ ຂໍໃຫ້ທຸກໆທ່ານຈົ່ງມີແຕ່ຄວາມສຸກກາຍສະບາຍໃຈປະສົບຜົນສຳເລັດໃນໜ້າທີ່ວຽກງານທຸກໆປະການດ້ວຍເທີ້ດ.

ມິຖຸນາ, 201

ທ. ຄຳໃບ ໄຊຍະລາດ

ນ. ມະນີວັນ ພົມພັກດີ

# ສາລະບານ

ໜ້າ

ບົດຄັດຫຍໍ້ ....... I
ຄຳຂອບໃຈ ....... II
ສາລະບານ ....... III
ສາລະບານຕາຕະລາງ ....... IV
ສາລະບານຮູບ ....... V
ຄຳອະທິບາຍສັນຍາລັກ ແລະ ອັກສອນຫຍໍ້ ....... VI
ຄຳນຳ ....... 1
ຈຸດປະສົງ ....... 1
ຄົ້ນຄວ້າເອກະສານ ....... 2
1. ອຸປະກອນ ແລະ ວິທີການ ....... 6
    1.1. ອຸປະກອນ ....... 6
    1.2. ວິທີການດຳເນີນງານ ....... 6
2. ສະຖານທີ່ສຶກສາ ....... 7
3. ໄລຍະເວລາໃນການສຶກສາ ....... 7
4. ຂອບເຂດການສຶກສາ ....... 7
ຜົນໄດ້ຮັບ ....... 8
1. ຂໍ້ມູນທາງດ້ານເສດຖະກິດ - ສັງຄົມ ....... 8
2. ສະພາບການສຳປະທານທີ່ດິນ ....... 9
3. ປັດໄຈຕ່າງໆທີ່ມີຜົນກະທົບຕໍ່ການດຳລົງຊີວິດຂອງປະຊາຊົນ ....... 12
4. ການປ່ຽນແປງຮູບແບບການຜະລິດກະສິກຳຂອງປະຊາຊົນ ....... 18
ວິຈານ ....... 22
ສະຫຼຸບ ....... 23
ຂໍ້ແນະນຳໃນການວິໄຈຄັ້ງຕໍ່ໄປ ....... 25
ເອກະສານອ້າງອີງ ....... 26
ເອກະສານຊ້ອນທ້າຍ ....... 27
ແບບຟອມສຳພາດ ....... 34

# ສາລະບານຕາຕະລາງ

**ຕາຕະລາງ ... ໜ້າ**

1. ສະແດງຄວາມຖີ່ຊ່ວງອາຍຸຂອງສຳມາຊິກຄອບຄົວທີ່ຖືກສຳພາດ ... 8
2. ການຈັດລະດັບການສຶກສາ ... 9
3. ສະແດງກິດຈະກຳຕ່າງໆຂອງບໍລິສັດເພັດດາລາ ... 10
4. ສະແດງຄຳຄິດເຫັນຂອງປະຊາຊົນຕໍ່ກັບການສຳປະທານ ... 11
5. ສະແດງກຸ່ມຄອບຄົວທີ່ມີເຂົ້າກຸ້ມກິນໃນແຕ່ລະໄລຍະ ... 13
6. ປຽບທຽບຄອບຄົວທີ່ມີເຂົ້າກິນກ່ອນ ແລະ ຫຼັງສຳປະທານ ... 13
7. ການຈັດປະເພດເຮືອນຕາມວັດສະດຸທີ່ໃຊ້ ... 16
8. ການຈັດປະເພດເຮືອນຕາມຂະໜາດຂອງເຮືອນ ... 16
9. ການຈັດປະເພດເຮືອນຕາມອາຍຸການໃຊ້ງານ ... 16
10. ສະແດງການນຳໃຊ້ທີ່ດິນ ... 19
11. ສະແດງຜົນຜະລິດຕໍ່ເນື້ອທີ່ການປູກພືດຂອງປະຊາຊົນ ... 19
12. ສະແດງຜົນຜະລິດຕໍ່ຄອບຄົວ ... 20
13. ສະແດງການລ້ຽງສັດ ... 20

# ສາລະບານຮູບ

ຮູບ...................................................................................................................... ໜ້າ

1. ກຣາບສະແດງສັດສ່ວນອາຊີບຕ່າງໆ ............................................................15
2. ກຣາບສະແດງສັດສ່ວນການລ້ຽງສັດຂອງປະຊາຊົນ .........................................21

**ຮູບຊ້ອນທ້າຍ**

1. ການນຳໃຊ້ນ້ຳຂອງປະຊາຊົນ......................................................................28
2. ຊ່າປ່າທີ່ສາມາດສ້າງລາຍຮັບໃຫ້ປະຊາຊົນ ....................................................28
3. ການຮຽນໜັງສືຂອງເດັກນ້ອຍ.....................................................................29
4. ອາຫານເສີມທີ່ໄດ້ຮັບຄວາມຊ່ວຍເຫຼືອຈາກໂຄງການ GAPE............................29
5. ເຄື່ອງຈັກສານ ແລະ ການຕຳຫູກຂອງຊາວບ້ານ .............................................30
6. ໂຮງຮຽນ ແລະ ສຸກສາລາປະຈຳບ້ານປະຈຸດອນ ............................................30
7. ເຮືອນຂອງປະຊາຊົນ .............................................................................30
8. ດິນທີ່ກຳລັງບຸກເບີກ ແລະ ສວນມັນຕົ້ນຂອງບໍລິສັດເພັດດາລາ............................31
9. ພື້ນທີ່ປູກເຂົ້າໄຮ່ຂອງປະຊາຊົນ ແລະ ພື້ນທີ່ສຳປະທານ ....................................31
10. ການຕັດຟືນຂອງປະຊາຊົນ ແລະ ປ່າໄມ້ໄລ່ ..................................................31
11. ສວນກ້ວຍຂອງປະຊາຊົນ ແລະ ແຫຼ່ງນ້ຳທຳມະຊາດ........................................32
12. ສັດລ້ຽງຂອງປະຊາຊົນ ............................................................................32
13. ແຜນວາດເຂດອະນຸລັກປາ - ກົບໜອງເຈມ..................................................32
14. ແຜນທີ່ການນຳໃຊ້ດິນ ແລະ ປ່າໄມ້ບ້ານປະຈຸດອນ ........................................33
15. ການສຳພາດ ແລະ ການລົງຢ້ຽມຢາມປະຊາຊົນ............................................33
16. ແຜນທີ່ຈັດສັນທີ່ດິນ ບ້ານປະຈຸດອນ ແລະ ບ້ານພໍ່ເບີຍ ...................................33

# ຄຳອະທິບາຍສັນຍາລັກ ແລະ ອັກສອນຫຍໍ້

## ຄຳອະທິບາຍສັນຍາລັກ

| | |
|---|---|
| % | ເຄື່ອງໝາຍເປັນເປີເຊັນ |
| = | ເຄື່ອງໝາຍເທົ່າກັບ |
| > | ເຄື່ອງໝາຍໃຫຍ່ກວ່າ |
| < | ເຄື່ອງໝາຍນ້ອຍກວ່າ |
| / | ເຄື່ອງໝາຍເປັນຕໍ່ຫົວໜ່ວຍ (ສ່ວນ) |
| + | ເຄື່ອງໝາຍບວກ |
| (...) | ເຄື່ອງໝາຍວົງເລັບ |

## ຄຳອະທິບາຍອັກສອນຫຍໍ້ພາສາລາວ

| | |
|---|---|
| ຮຕ | ເຮັກຕາ |
| ຈນ | ຈຳນວນ |
| ຄຄ | ຄອບຄົວ |

## ຄຳອະທິບາຍອັກສອນຫຍໍ້ພາສາອັງກິດ

| | |
|---|---|
| kg | Kilogram |
| km | Kilometer |
| ha | Hectare |
| T | Ton |

# ຄຳນຳ

ປະເທດລາວ ເປັນໜຶ່ງໃນບັນດາປະເທດເຂດອາຊຽນທີ່ມີການພັດທະນາປະເທດທີ່ຍັງຊັກຊ້າ, 32% ຂອງພົນລະເມືອງແມ່ນຍັງຢູ່ໃນສະຖານະທຸກຈົນ ໂດຍສ່ວນໃຫຍ່ປະຊາກອນ 76% ຂອງປະເທດແມ່ນອາໄສການກະສິກຳເປັນຫຼັກ (ບົດສະຫຼູບ ຖອດຖອນບົດຮຽນ 5 ປີ ຂອງສະພາແຫ່ງຊາດ) ເຊິ່ງລາຍຮັບຈາກການກະສິກຳເຫຼົ່ານີ້ ບາງຄັ້ງພໍແຕ່ກຸ້ມກັບການບໍລິໂພກພາຍໃນຄອບຄົວເທົ່ານັ້ນ, ແຕ່ບາງຄັ້ງຍັງຂາດແຄນທາງດ້ານສະບຽງອາຫານ. ປະຈຸບັນຕາມແຜນພັດທະນາເສດຖະກິດ - ສັງຄົມ 5 ປີ ຂອງລັດຖະບານຄັ້ງໜ້າແມ່ນຍຶດຖືເອົາ ການກະສິກຳ ເພື່ອປ້ອນໃຫ້ແກ່ຂະແໜງອຸດສາຫະກຳປຸງແຕ່ງ, ໜຶ່ງໃນນັ້ນ ແມ່ນໄດ້ເນັ້ນໃສ່ການປູກໄມ້ອຸດສາຫະກຳ ໂດຍອີງໃສ່ທ່າແຮງຂອງພູມມີປະເທດ.

ໃນປີ 2001, ກອງປະຊຸມໃຫຍ່ຄັ້ງທີ່ 7 ຂອງພັກປະຊາຊົນປະຕິວັດລາວໄດ້ເປີດຂຶ້ນໃນກອງປະຊຸມໄດ້ກຳນົດນະໂຍບາຍໃນການລຶບລ້າງຄວາມທຸກຈົນ ໂດຍເນັ້ນໜັກໃສ່ໃຫ້ປະຕິບັດໃນ 3 ໜ້າວຽກດັ່ງນີ້: ການພັດທະນາທາງດ້ານເສດຖະກິດ, ການພັດທະນາທາງ ດ້ານວັດທະນະທຳ - ສັງຄົມ ແລະ ການປົກປັກຮັກສາສະພາບແວດລ້ອມ (ບົດສະຫຼຸບ ກອງປະຊຸມໃຫຍ່ຄັ້ງທີ 7 ຂອງພັກ, 2003).

ແຂວງສາລະວັນ ແມ່ນຕັ້ງຢູ່ທາງພາກໃຕ້ຂອງ ສປປ ລາວ ມີຊາຍແດນຕິດຈອດກັບປະເທດຫວຽດນາມ, ແຂວງເຊກອງ, ແຂວງຈຳປາສັກ, ແຂວງສະຫວັນນະເຂດ ແລະ ປະເທດໄທ. ແຂວງສາລະວັນ ມີພົນລະເມືອງທັງໝົດແມ່ນ 340.000 ຄົນ (ສະຖິຕິ, 2007), ເນື້ອທີ່ທັງໝົດ 1.069.100 ha, ມີ 8 ເມືອງ ໃນນັ້ນເມືອງຕະໂອ້ຍ ເປັນເມືອງເຂດພູດອຍ, ມີຄວາມຄ້ອຍຊັນເລັກໜ້ອຍເໝາະແກ່ການປູກພືດ ອຸດສາຫະກຳ ແລະ ລ້ຽງສັດເປັນສິນຄ້າ (ໜັງສືພິມລາຍວັນ ເສດຖະກິດ ແລະ ສັງຄົມ, ສະບັບ 446 ວັນທີ 1 ຕຸລາ 2008).

## ຈຸດປະສົງ

1. ເພື່ອສຶກສາ ສະພາບການສຳປະທານທີ່ດິນໃນເຂດບ້ານປະຈຸດອນ ແລະ ບ້ານພໍ່ເບີຍ
2. ເພື່ອສຶກສາ ປັດໄຈຕ່າງໆທີ່ມີຜົນກະທົບຕໍ່ການດຳລົງຊີວິດຂອງປະຊາຊົນໃນເຂດທີ່ສຶກສາ
3. ເພື່ອສຶກສາ ການປ່ຽນແປງທາງດ້ານຮູບແບບການຜະລິດກະສິກຳຂອງປະຊາຊົນ

# ການຄົ້ນຄວ້າເອກະສານ

ຄໍາພັນ ແກ້ວວິໄລສັກ ແລະ GAPE ລາຍງານວ່າ: ການສໍາປະທານທີ່ດິນ ແມ່ນມີຜົນກະທົບອັນຮ້າຍແຮງຫຼາຍຕໍ່ຊີວິດການເປັນຢູ່ຂອງປະຊາຊົນ, ພວກເຂົາໄດ້ຮັບຜົນກະທົບທັງທາງກາຍ ແລະ ຈິດໃຈ, ຫຼັງຈາກທີ່ໄດ້ມີການສໍາປະທານແລ້ວກໍ່ມີການບຸກເບີກເຂົ້າມາທັນທີ ໂດຍບໍ່ໃຫ້ເວລາແກ່ປະຊາຊົນປັບຕົວເລີຍ, ພື້ນທີ່ດິນຫຼາຍບ່ອນແມ່ນຖືກມີການປ່ຽນແປງເຊັ່ນ: ດິນປ່າເລົ່າ, ດິນປູກເຂົ້າ, ໜອງທໍາມະຊາດ, ສວນປູກໄມ້ສັກ, ສວນສີສຽດ, ບໍເຫືອງ, ສວນໄມ້ໃຫ້ໝາກ, ໄມ້ປ່ອງ ແລະ ທົ່ງຫຍ້າທີ່ໃຊ້ລ້ຽງສັດ ແມ່ນຖືກດຸດອອກເພື່ອປູກໄມ້ອຸດສາຫະກໍາ, ການລ້ຽງສັດ ແມ່ນພົບຄວາມຫຍຸ້ງຍາກ, ຢູ່ໃນບາງພື້ນທີ່ ແມ່ນຫ້າມບໍ່ໃຫ້ລ້ຽງສັດ ແລະ ສົ່ງຕໍ່ການຖືກປັບໄໝ. ຜົນກະທົບທາງດ້ານວັດທະນະທໍາ - ສັງຄົມ ແມ່ນມີເງິນໜ້ອຍສໍາລັບສ້າງບຸນສິນກິນທານ, ບຸນປະເພນີຕ່າງໆ ແລະ ການລ້ຽງບູຊາຕ່າງໆເລີ່ມຫຼຸດລົງ, ມີການລັກເລັກຂະໂມຍນ້ອຍ, ມີຜົນກະທົບຕໍ່ສິ່ງແວດລ້ອມ ແລະ ລະບົບນິເວດເຊັ່ນ: ການໃຊ້ຢາປາບສັດຕູພືດ ແລະ ຢາຂ້າແມງໄມ້, ຈາກທີ່ເມື່ອກ່ອນມີອາຊີບເປັນຊາວກະສິກອນ, ໃນປະຈຸບັນ ແມ່ນກາຍມາເປັນກໍາມະກອນຮັບຈ້າງໃນສວນຢາງພາລາ. ໃນປະຈຸບັນ ແມ່ນຍັງບໍ່ທັນມີກົນໄກໃດທີ່ເໝາະສົມສໍາລັບການແກ້ໄຂບັນຫາດັ່ງກ່າວ, ການປະຕິບັດນະໂຍບາຍຂອງລັດຖະບານ ແມ່ນຍັງບໍ່ທັນຖືກຕ້ອງຄັກແນ່ກ່ຽວກັບວິທີການສໍາປະທານ, ຍັງບໍ່ໄດ້ມີສ່ວນຮ່ວມຈາກປະຊາຊົນ ແລະ ຂາດຄວາມປອດໃສ, ຊາວບ້ານຍັງບໍ່ໄດ້ຮັບຮູ້ເຖິງສິດຂອງເຂົາເຈົ້າຕາມລະບຽບກົດໝາຍ (http://www.laolandissues.org/presentations.html).

ອີງໃສ່ແຜນການພັດທະນາເສດຖະກິດ - ສັງຄົມແຫ່ງຊາດ 5 ປີ ຄັ້ງທີ VII (2011 - 2015) ສໍາລັບການຜະລິດກະສິກໍາຂອງ ແຂວງສາລະວັນ ແມ່ນໄດ້ແນໃສ່ການສົ່ງເສີມການປູກເຂົ້າ, ການລ້ຽງສັດ, ປູກພືດອຸດສາຫະກໍາເຊັ່ນ: ກາເຟ, ມັນຕົ້ນ, ມັນດ້າງ, ສາລີ, ກ້ວຍ, ຢາງພາລາ ແລະ ພືດອື່ນໆ ນອກຈາກນີ້ ຍັງຈະໄດ້ພັດທະນາເຂດອຸດສາຫະກໍາປຸງແຕ່ງກະສິກໍາ ແລະ ກໍ່ສ້າງພື້ນຖານໂຄງລ່າງຕ່າງໆເຊັ່ນ: ເສັ້ນທາງ ເປັນຕົ້ນ (ກະຊວງແຜນການ ແລະ ການລົງທຶນ, ວັນທີ 6 ພຶດສະພາ 2010).

ເມືອງຕະໂອ້ຍ ເປັນເມືອງໜຶ່ງທີ່ນອນຢູ່ໃນ 47 ເມືອງທຸກຍາກໃນທົ່ວປະເທດ ທີ່ຜ່ານມາປະຊາຊົນເຄີຍເຮັດໄຮ່ປູກເຂົ້າ; ປະຈຸບັນພັກ ແລະ ລັດຖະບານໄດ້ເຫັນຄວາມສໍາຄັນໃນການດໍາລົງຊີວິດຂອງປະຊາຊົນເຂດນີ້ ໄດ້ມີການຫັນປ່ຽນອາຊີບຂອງປະຊາຊົນໃນເຂດນີ້ ຈາກການເຮັດໄຮ່ປູກເຂົ້າມາເປັນການເຮັດນາແບບຄົງທີ່ ເພື່ອທົດແທນການເຮັດໄຮ່ ໂດຍມີການສົ່ງເສີມການຜະລິດກະສິກໍາຈາກພາກລັດ ແລະ ເອກະຊົນ ເປັນຕົ້ນແມ່ນການສົ່ງເສີມການເຮັດນາປູກເຂົ້າ, ລ້ຽງສັດ ແລະ ປູກພືດຕ່າງໆ ໃຫ້ແກ່ປະຊາຊົນດ້ວຍການຊຸກຍູ້ຫຼາຍຮູບຫຼາຍແບບ ເພື່ອເລັ່ງໃສ່ລົບລ້າງການຖາງປ່າເຮັດໄຮ່ (ບົດສະຫຼຸບ ການຈັດຕັ້ງປະຕິບັດແຜນພັດທະນາກະສິກໍາ ແລະ ປ່າໄມ້, ງວດທີ II (6 ເດືອນຕົ້ນປີ) ແລະ ແຜນການ 9 ເດືອນທ້າຍປີ 2009 - 2010).

Maslow ກ່າວວ່າ: ລະດັບຂັ້ນຄວາມຕ້ອງການຂອງມະນຸດມີຢູ່ 5 ຂັ້ນດັ່ງຄື: ຄວາມຕ້ອງການທາງດ້ານຮ່າງກາຍ (Physsiologycal needs) ເປັນຄວາມຕ້ອງການຂັ້ນພື້ນຖານໃນການດຳລົງຊີວິດໄດ້ແກ່: ຄວາມຕ້ອງການທາງດ້ານອາຫານ, ນ້ຳດື່ມ, ອາກາດຫາຍໃຈ, ການພັກຜ່ອນ, ຄວາມອົບອຸ່ນ, ແຕ່ງງານເຫຼົ່ານີ້ເປັນຕົ້ນ.

ຄວາມຕ້ອງການຄວາມປອດໄພ (Safety needs) ເມື່ອຄວາມຕ້ອງການທາງດ້ານຮ່າງກາຍໄດ້ຮັບຄວາມເພິ່ງພໍໃຈ ແລ້ວບຸກຄົນກໍຈະພັດທະນາການໄປສູ່ຂັ້ນໃຫມ່ຕໍ່ໄປ ຈະສັງເກດໄດ້ງ່າຍໆໃນເດັກນ້ອຍ ແມ່ນຕ້ອງການຄວາມຊ່ວຍເຫຼືອ ແລະ ຕ້ອງການເພິ່ງພາອາໄສຜູ້ອື່ນ, ຄວາມຕ້ອງການຄວາມປອດໄພຈະຍັງມີອິດທິພົນ ເຖິງແມ່ນວ່າຈະຜ່ານພົ້ນໄວເດັກໄປແລ້ວກໍຕາມ ເວລາທີ່ເຮັດວຽກກໍຍັງຕ້ອງການຄວາມປອດໄພທາງດ້ານສຸຂະພາບ ແລະ ຊັບສິນ ເປັນຕົ້ນ.

ຄວາມຕ້ອງການຄວາມຮັກ ແລະ ຄວາມເປັນເຈົ້າຂອງ (Belongingness and love needs) ໄດ້ແກ່: ຄວາມສຳພັນພາຍໃນຄອບຄົວ ຫຼື ກັບຜູ້ອື່ນ, ສຳມາຊິກພາຍໃນກຸ່ມຈະເປັນເປົ້າໝາຍສຳຄັນສຳລັບບຸກຄົນ, ຈະຮູ້ສຶກເຈັບປວດເມື່ອບໍ່ມີໃຜສົນໃຈ ແລະ ຖືກຕັດອອກຈາກສັງຄົມບາງຄົນຍັງບໍ່ຍອມຮັບສະພາບຄວາມເປັນຈິງຂອງຕົນເອງເຊັ່ນ: ຖານະ, ຮູບຮ່າງໜ້າຕາ ເປັນຕົ້ນ.

ຄວາມຕ້ອງການໄດ້ຮັບການນັບຖືຍົກຍ້ອງ (Self_Esteem needs) ໄດ້ແກ່: ຄວາມຕ້ອງການມີອຳນາດໃນສັງຄົມ, ການໄດ້ຮັບການຍົກຍ້ອງ ແລະ ການນັບຖືຈາກຜູ້ອື່ນ, ຕ້ອງການຄວາມໄວ້ວາງ ໃຈຈາກບຸກຄົນອື່ນໆ.

ຄວາມຕ້ອງການເຂົ້າໃຈຕົນເອງຢ່າງແທ້ຈິງ (Self_Actualization needs) ເປັນຄວາມຕ້ອງການລຳດັບສຸດທ້າຍ ຖ້າຄວາມຕ້ອງການລຳດັບຂັ້ນກ່ອນໆໄດ້ເຮັດໃຫ້ເກີດຄວາມເພິ່ງພໍໃຈຢ່າງມີປະສິດທິພາບ, ເປັນຄວາມປາຖະໜາໃນທຸກສິ່ງທຸກຢ່າງ ເຊິ່ງບຸກຄົນຈະໄດ້ຮັບຢ່າງເໝາະສົມ ແລະ ມີຄວາມປະສົບຜົນສຳເລັດຢ່າງແທ້ຈິງ (http://www.kmitnbxmie8.com/index.php?lay=show&ac=article&Id=5354814&Ntype=3downloaded date: 27/03/2011).

Miles. Kenney_Lazar: ການສຳປະທານທີ່ດິນ ຢູ່ແຂວງອັດຕະປື ພາກໃຕ້ຂອງລາວຈຸດປະສົງຂອງການສຳປະທານໃນຄັ້ງນີ້ແມ່ນ ເພື່ອເອົາເງິນທີ່ໄດ້ຈາກການສຳປະທານໄປນຳໃຊ້ເຂົ້າໃນການສ້າງພື້ນຖານໂຄງລ່າງເຊັ່ນ: ສ້າງບ້ານພັກຊີເກມ. ນອກຈາກນັ້ນ ຍັງເປັນການສ້າງລາຍຮັບ ແລະ ສ້າງເສດຖະກິດອັນໃໝ່ໃຫ້ແກ່ປະຊາຊົນ ແລະ ຜູ້ທີ່ມີສ່ວນກ່ຽວຂ້ອງ, ເຮັດໃຫ້ເຂົາເຈົ້າມີອາຊີບ ແລະ ມີວຽກເຮັດງານທຳ, ເປັນການຫຼຸດຜ່ອນການຖາງປ່າເຮັດໄຮ່, ໄພຫວ່າງງານອີກດ້ວຍແຕ່ໃນເວລາດຽວກັນກໍມີບາງຄອບຄົວ ຫຼື ບາງກຸ່ມຄົນທີ່ບໍ່ເຫັນດີ ແລະ ຄັດຄ້ານ ເນື່ອງຈາກວ່າເຂດທີ່ມີການສຳປະທານ ແມ່ນໄປກວມເອົາພື້ນທີ່ຂອງຊາວກະສິກອນ, ປ່າຊົມໃຊ້, ປ່າສະຫງວນ ແລະເຂດຫວງຫ້າມຕ່າງໆ ເຊິ່ງເຮັດໃຫ້ເຂົາເຈົ້າບໍ່ພໍໃຈຕໍ່ກັບບັນຫາທີ່ເກີດຂຶ້ນ ເຖິງແມ່ນວ່າຈະມີການຊົດເຊີຍຄ່າເສຍຫາຍດັ່ງກ່າວ. ນອກຈາກນັ້ນ, ລາຍຮັບທີ່ໄດ້ຈາກການຮັບຈ້າງເປັນກຳມະກອນ ແມ່ນຍັງຕ່ຳ, ເຮັດວຽກຢູ່ໃນເງື່ອນໄຂທີ່ທຸກຍາກ, ມີບັນຫາໃນການຈ່າຍຄ່າຈ້າງ ແລະ ສູນເສຍຄວາມເປັນອິດສະຫຼະພາບ. ຜົນກະທົບຂອງການສຳປະທານທີ່ດິນ ແມ່ນໄດ້ເຮັດໃຫ້ປະຊາຊົນໃນເຂດທີ່ມີ

ການສຳປະທານທີ່ດິນບໍ່ສາມາດປ່ອຍງົວ ແລະ ຄວາຍໄດ້. ເນື່ອງຈາກວ່າ ເມື່ອເວລາທີ່ງົວ ແລະ ຄວາຍເຂົ້າໄປສວນຢາງພາລາກໍຈະຖືກທາງບໍລິສັດປັບໄໝ ແລະ ສັດຖືກຂ້າ, ປະຊາຊົນບາງບ້ານບໍ່ໄດ້ຮັບຄ່າຊົດເຊີຍ, ເຊິ່ງເຮັດໃຫ້ມີຜົນກະທົບຕໍ່ການດຳລົງຊີວິດຂອງປະຊາຊົນ (ການນຳສະເໜີບົດຄົ້ນຄວ້າເລື່ອງ: ການສຳປະທານ ແລະ ການຄອບຄອງທີ່ດິນຂອງ (miles. Kenney_lazar, fulbrigth scholar & visiting Research Affiliat, Faculty of Fore- stry, National University of Lao, 2010).

ລໍເຣັນ ໂຣມາກນີ ກ່າວວ່າ: ການແບ່ງປັນດິນເພື່ອໃຫ້ສຳປະທານ ແມ່ນໄດ້ເກີດຂຶ້ນໂດຍບໍ່ໄດ້ມີການປຶກສາຮ່ວມກັບຊາວບ້ານ (ລະບົບແຕ່ເທິງລົງລຸ່ມ), ການປູກພືດການຄ້າ ແມ່ນມີຜົນກະທົບຢ່າງໃຫຍ່ຫຼວງຕໍ່ການລ້ຽງສັດ ເຊິ່ງເປັນແຫຼ່ງອາຫານ ແລະ ແຫຼ່ງລາຍຮັບທີ່ສຳຄັນ, ຊາວນາບໍ່ມີຄວາມສິ້ນເຄີຍກັບການລ້ຽງສັດໄວ້ໃນຄອກ ແລະ ປະຈຸບັນຕ້ອງຂາຍສັດລ້ຽງອອກ ເພາະຢ້ານໄດ້ຈ່າຍຄ່າເສຍຫາຍຈາກສັດລ້ຽງໄປທຳລາຍຕົ້ນຢາງພາລາໃນສວນທີ່ປູກໃໝ່, ສະພາບແວດລ້ອມກໍໄດ້ຮັບຜົນກະທົບ ໂດຍດິນເກີດມີການເຊາະເຈື່ອນ ເຊິ່ງມີຜົນມາຈາກການປູກຕົ້ນຢາງ ເຮັດໃຫ້ມີການສູນເສຍຊີວະນາໆພັນ ແລະ ເຄື່ອງປ່າຂອງດົງ ເຊິ່ງຊາວບ້ານເຄີຍໄດ້ນຳໃຊ້ປະໂຫຍດຈາກພື້ນທີ່ດັ່ງກ່າວ.

ເທບພະລິດ ແລະ ສຸພາລັກ ກ່າວວ່າ: ຜົນກະທົບຂອງການສຳປະທານທີ່ດິນຕໍ່ການດຳລົງຊີວິດຂອງປະຊາຊົນ ແມ່ນຍັງມີຫຼາຍຄອບຄົວທີ່ບໍ່ເຄີຍໄດ້ຍິນກ່ຽວກັບການສຳປະທານທີ່ດິນ ແລະ ພື້ນທີ່ບຸກເບີກ ແມ່ນໄດ້ໄປກວມເອົາພື້ນທີ່ຂອງປະຊາຊົນ, ປະຊາຊົນບໍ່ຍິນຍອມໃຫ້ມີການບຸກເບີກທາງບໍລິສັດຈຶ່ງໄດ້ປ່ຽນແຜນມາເປັນການຊຸກຍູ້ໃຫ້ປະຊາຊົນເປັນຜູ້ຜະລິດ, ການສຳປະທານທີ່ດິນແມ່ນໄດ້ເຮັດໃຫ້ແຫຼ່ງອາຫານໃນທຳມະຊາດຫຼຸດລົງ, ຂາດພື້ນທີ່ທຳການຜະລິດ, ປ່າໄມ້ຖືກທຳລາຍ, ດິນເຊື່ອມຄຸນນະພາບ, ການລ້ຽງສັດຂອງປະຊາຊົນແມ່ນພົບຄວາມຫຍຸ້ງຍາກ ເນື່ອງຈາກທົ່ງຫຍ້າທີ່ໃຊ້ລ້ຽງສັດແມ່ນຢູ່ໄກ ແລະ ມີຫຍ້າໜ້ອຍ, ບາງຄັ້ງສັດກໍໄປທຳລາຍຜົນລະປູກ ເຮັດໃຫ້ປະຊາຊົນຈຳເປັນຕ້ອງໄດ້ຂາຍສັດຂອງຕົນເອງອອກໄປ, ບັນຫາໃນການປູກພືດ ແມ່ນປະຊາຊົນຍັງຂາດຄວາມຮູ້ໃນການປະກອບອາຊີບ, ລາຄາຜົນຜະລິດຕົກຕໍ່າ, ພະຍາດ ແລະ ແມງໄມ້ລະບາດ, ຂາດທຶນຮອນ, ແຮງງານ ແລະ ພື້ນທີ່ໃນການຜະລິດບໍ່ພຽງພໍ, ໃນພື້ນທີ່ທຳການຜະລິດ ແມ່ນຍັງມີລະເບີດທີ່ບໍ່ທັນແຕກຕົກຄ້າງຢູ່, ປະຊາຊົນສ່ວນໃຫຍ່ ແມ່ນບໍ່ຢາກໃຫ້ມີການສຳປະທານທີ່ດິນໃນເຂດບ້ານຂອງຕົນ ຍ້ອນບໍ່ເຊື່ອໝັ້ນໂຄງການ ແລະ ບໍລິສັດຕ່າງໆທີ່ຈະມາລົງທຶນ, ຢ້ານບໍ່ມີດິນໄວ້ໃຫ້ລູກຫຼານສືບທອດ ແຕ່ມີປະຊາຊົນຈຳນວນໜຶ່ງແມ່ນຢາກໃຫ້ມີການສຳປະທານທີ່ດິນ ເພາະເຫັນວ່າເຮັດໃຫ້ບ້ານເມືອງຈະເລີນຂຶ້ນ.

ອາຄົມ ຕຸນາລົມ ເວົ້າວ່າ: ປະເທດລາວມີເນື້ອທີ່ທັງໝົດປະມານ 23,7 ລ້ານ ha ໃນນັ້ນ 42% ແມ່ນຖືກປົກຄຸມດ້ວຍປ່າໄມ້ (ຍຸດທະສາດປ່າໄມ້ປີ 2020), ພື້ນທີ່ປະມານ 80% ເປັນເຂດພູດອຍ, ປະຊາກອນປະມານ 90% ອາໄສຢູ່ເຂດຊົນນະບົດສ່ວນໃຫຍ່ປະກອບອາຊີບເປັນຊາວກະສິກອນ ແລະ ອາໄສທຳມະຊາດເປັນແຫ່ງອາຫານ, ປະຈຸບັນ ຄວາມຕ້ອງການນຳໃຊ້ທີ່ດິນໃນຊົນ

ນະບົດນັບມື້ນັບເພີ່ມຂຶ້ນ ແຕ່ທີ່ດິນດັ່ງກ່າວຂ້ອນຂ້າງຈຳກັດໃນການຕອບສະໜອງຄວາມຕ້ອງການຂອງສັງຄົມ, ພື້ນທີ່ການຜະລິດຈຳນວນໜຶ່ງຖືກປ່ຽນແທນດ້ວຍໄມ້ອຸດສາຫະກຳເຊັ່ນ: ຢາງພາລາ, ໄມ້ວິກ, ໄມ້ເກດສະໜາ ແລະ ອື່ນໆ, ໄດ້ມີການບຸກລຸກພື້ນທີ່ປ່າສະຫງວນ, ປ່າປ້ອງກັນ ແລະ ທີ່ດິນຂອງລັດ. ນອກຈາກນັ້ນ ໃນພື້ນທີ່ໆມີການສຳປະທານທີ່ດິນຂະໜາດໃຫຍ່ແມ່ນມີຜົນກະທົບຫຼາຍດ້ານເຊັ່ນ: ພື້ນທີ່ສຳລັບການລ້ຽງສັດ ໂດຍສະເພາະແມ່ນງົວ ແລະ ຄວາຍ ທີ່ມີພື້ນທີ່ລ້ຽງທີ່ຈຳກັດ ເຮັດໃຫ້ຜູ້ທີ່ຢຶດຖືອາຊີບລ້ຽງສັດ ໄດ້ຍ້າຍສັດອອກໄປລ້ຽງຢູ່ບ່ອນອື່ນ ຫຼື ຈົນກະທັ້ງຕ້ອງຂາຍສັດລ້ຽງຂອງຕົນອອກ ເພາະຢ້ານຈະບໍ່ມີຄວາມສາມາດຈ່າຍຄ່າເສຍຫາຍຈາກການທຳລາຍຂອງສັດລ້ຽງ, ປະຊາຊົນຈຳຕ້ອງຊອກພື້ນທີ່ທຳການຜະລິດໃໝ່ ໂດຍໄດ້ມີການບຸກລຸກເຂົ້າປ່າຫວງຫ້າມຕ່າງໆ ເນື່ອງຈາກວ່າ ພື້ນທີ່ໆມີການສຳປະທານນັ້ນບາງບ່ອນໄດ້ກວມເອົາພື້ນທີ່ທຳການຜະລິດ ແລະ ພື້ນທີ່ທຳມາຫາກິນຂອງປະຊາຊົນ ເປັນສາເຫດທີ່ກໍ່ໃຫ້ເກີດມີການຂັດແຍ້ງກັນໃນສັງຄົມ, ປະຊາຊົນເສຍຜົນປະໂຫຍດທີ່ຄວນຈະໄດ້ຮັບຈາກການສຳປະທານຂອງບໍລິສັດ.

ອີງການ JICA ລາຍງານວ່າ: ພາຍຫຼັງທີ່ມີການສຳປະທານທີ່ດິນຢູ່ ແຂວງຄຳມ່ວນ ເພື່ອສ້າງໂຮງງານຊີມັງ ແມ່ນໄດ້ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນບ້ານເຫຼົ່າ, ບ້ານນາຄຳ, ບ້ານອຸດົມວິໄລ, ບ້ານພົນ ແລະ ບ້ານໂພນສະຫວ່າງ ໄດ້ຮັບຜົນກະທົບຫຼາຍດ້ານເຊັ່ນ: ນ້ຳບາດານ 2 ແຫ່ງແມ່ນໃຊ້ບໍ່ໄດ້, ນ້ຳເປັນສີຄຳ, ຊາວບ້ານໄດ້ສະເໜີໃຫ້ທາງໂຮງງານມາສ້ອມແປງ ແຕ່ກໍຍັງບໍ່ມີໃຜມາສ້ອມແປງ, ເກີດມີຄົນຂີ້ລັກຫຼາຍຂຶ້ນຢູ່ໃນບ້ານ, ຜູ້ທີ່ເຮັດວຽກ ຢູ່ໃນໂຮງງານສ່ວນໃຫຍ່ແມ່ນຄົນຈີນທີ່ເປັນຫົວໜ້າ ສ່ວນຊາວບ້ານແມ່ນໄດ້ເຮັດແຕ່ວຽກທີ່ຍາກ ແລະ ອັນຕະລາຍ, ສິ່ງເສດເຫຼືອຈາກໂຮງງານແມ່ນເຮັດໃຫ້ເກີດນ້ຳເສຍ, ເປັນມົນລະພິດທາງອາກາດ, ພືດມີສານຕົກຄ້າງຈາກຝຸ່ນລະອອງທີ່ປິວໄປຕາມອາກາດ ແລະ ບໍ່ນ້ຳແຫ້ງແລ້ງ.

ອີງຕາມດຳລັດ 135 ວ່າດ້ວຍການເອົາທີ່ດິນຂອງລັດໃຫ້ເຊົ່າ ຫຼື ສຳປະທານ ລົງວັນທີ 25/05/2009. ການເຊົ່າທີ່ດິນແມ່ນການອະນຸຍາດໃຫ້ການຈັດຕັ້ງ, ບຸກຄົນ ຫຼື ນິຕິບຸກຄົນ ມີສິດໃຊ້ທີ່ດິນຂອງລັດຕາມເງື່ອນໄຂ ແລະ ກຳນົດເວລາ ໂດຍມີຂໍ້ຜູກພັນສັນຍາຢ່າງຖືກຕ້ອງຕາມລະບຽບກົດໝາຍ.

ການສຳປະທານທີ່ດິນ ແມ່ນການອະນຸຍາດໃຫ້ບຸກຄົນ ຫຼື ນິຕິບຸກຄົນ ເພື່ອດຳເນີນກິດຈະການ ໂດຍການມີສິດໃຫ້ເຊົ່າທີ່ດິນຂອງລັດເຂົ້າໃນກິດຈະການໃດໜຶ່ງໄດ້ຕາມເງື່ອນໄຂ ແລະ ກຳນົດເວລາ ໂດຍມີຂໍ້ຜູກພັນສັນຍາຢ່າງຖືກຕ້ອງຕາມລະບຽບກົດໝາຍ (ມາດຕາ 2 ຂອງດຳລັດ 135).

ການສຳປະທານທີ່ດິນຂອງລັດເພື່ອກິດຈະກຳການການກະສິກຳ ແລະ ການປູກໄມ້ ແມ່ນໃຫ້ດຳເນີນໃນພື້ນທີ່ດິນກະສິກຳ ເພື່ອປູກພືດເສດຖະກິດທີ່ລັດໄດ້ຈັດສັນໃຫ້ເທົ່ານັ້ນ, ທີ່ດິນຂອງລັດທີ່ໃຫ້ສຳປະທານ ເພື່ອກິດຈະການປູກໄມ້ອຸດສາຫະກຳ ຫຼື ໄມ້ເສດຖະກິດ ແລະ ເຄື່ອງປ່າຂອງດົງ ແມ່ນໃຫ້ດຳເນີນໃນພື້ນທີ່ປອກໂຫຼ້ນ, ທີ່ດິນປ່າຊຸດໂຊມທີ່ບໍ່ສາມາດ ຟື້ນຟູດ້ວຍຕົວມັນເອງທີ່ລັດໄດ້ຈັດສັນໃຫ້ເທົ່ານັ້ນ (ມາດຕາ 26 ຂອງດຳລັດ 135).

# ອຸປະກອນ ແລະ ວິທີການ

## 1. ອຸປະກອນ

- ກ້ອງຖ່າຍຮູບ
- Computer
- ອຸປະກອນບັນທຶກເຊັ່ນ: ຟອມສຳພາດ, ປຶ້ມ, ບິກ, ບັນທັດ ແລະ ອື່ນໆ.

## 2. ວິທີການ

### 2.1. ການເລືອກ ແລະ ການສຳພາດຊາວກະສິກອນ

ການສຶກສາແມ່ນໄດ້ດຳເນີນໄປຢູ່ໃນ 2 ບ້ານເປົ້າໝາຍຄື: ບ້ານປະຈຸດອນ ແລະ ບ້ານພໍ່ເບີຍ ເມືອງຕະໂອ້ຍ ແຂວງສາລະວັນ, ການສຸ່ມແມ່ນໄດ້ສຸ່ມ 32% ຂອງຈຳນວນ ຄອບຄົວທັງໝົດ 60 ຄອບຄົວ ຂອງບ້ານເປົ້າໝາຍ.

### 2.2. ວິທີການດຳເນີນການຄົ້ນຄວ້າ

ວິທີການວິໄຈໃນຄັ້ງນີ້ແມ່ນຈະໄດ້ໃຊ້ທັງຂໍ້ມູນທາງຄຸນນະພາບ ແລະ ປະລິມານ, ວິທີເກັບຂໍ້ມູນ ແມ່ນຈະໄດ້ໃຊ້ສອງຂໍ້ມູນຕົ້ນຕໍຄື: ຂໍ້ມູນມືໜຶ່ງ (primary data) ແລະ ຂໍ້ມູນທີ່ມີຢູ່ແລ້ວ (Secondary data). ນອກຈາກນັ້ນຍັງຈະໃຊ້ວິທີການສັງເກດ ເຊິ່ງຈະໄດ້ຂໍ້ມູນຄວາມເປັນຈິງທາງດ້ານການນຳໃຊ້ທີ່ດິນຂອງທ້ອງຖິ່ນ, ໃນເບື້ອງຕົ້ນແມ່ນຈະໄດ້ມີການທົດສອບແບບຟອມ ໂດຍການສຳພາດເອົາ 20 ຄອບຄົວ ແລ້ວນຳມາກວດສອບ ເພື່ອດັດແປງ ແລະ ແກ້ໄຂໃຫ້ເໝາະສົມກັບສະພາບຄວາມເປັນຈິງ.

### 2.3. ການເກັບກຳຂໍ້ມູນ

ກ. ຂໍ້ມູນມືໜຶ່ງ

ຂໍ້ມູນມືໜຶ່ງ (primary data) ແມ່ນການລົງສຶກສາໃນທ້ອງຖິ່ນ ໂດຍການໃຊ້ແບບຟອມສຳພາດ ເພື່ອສຳພາດຂໍ້ມູນໃໝ່ ຫຼື ຂໍ້ມູນສົດນຳແຕ່ລະບ້ານ ແລະ ແຕ່ລະຄອບຄົວ ເພື່ອໃຫ້ຮູ້ເຖິງສະພາບການນຳໃຊ້ທີ່ດິນ, ເສດຖະກິດ - ສັງຄົມ, ການຜະລິດ, ລາຍຮັບ, ລາຍຈ່າຍຕະຫລອດເຖິງຮີດຄອງປະເພນີ ແລະ ອື່ນໆ.

ຂ. ຂໍ້ມູນທີ່ມີຢູ່ແລ້ວ

ນັກຄົ້ນຄວ້າຈະໄດ້ຊອກຫາຂໍ້ມູນ ແລະ ລວບລວມຂໍ້ມູນນຳບັນດາອີງການທີ່ມີການສຳປະທານທີ່ດິນຢູ່ໃນລາວ, ບັນດາພາກສ່ວນລັດ, ໂຄງການ, ບໍລິສັດ, ສູນຄົ້ນຄວ້າທົດລອງກະສິກຳ ແລະ ບຸກຄົນອື່ນໆ ບັນດາຂໍ້ມູນມືສອງນີ້ຈະເປັນກຸນແຈສຳຄັນເພື່ອກ້າວໄປເຖິງການສຶກສາບັນດາຫຼັກການ ແລະ ເຫດຜົນຂອງການສຳປະທານທີ່ດິນຢູ່ໃນລາວ ແລະ ປະເທດໃກ້ຄຽງ, ປັດໄຈອັນ

ໃດ ທີ່ເປັນແຮງຈູງໃຈໃນການຫັນມາສຸມໃສ່ ການສຳປະທານທີ່ດິນ ຢ່າງແຜ່ຫຼາຍໃນຫຼາຍໆເຂດຢູ່ທຸກພາກຂອງລາວ ລວມທັງຂໍ້ມູນການນຳໃຊ້ທີ່ດິນຕ່າງໆ ທີ່ກ່ຽວຂ້ອງ.

2.4. <u>ການວິເຄາະຂໍ້ມູນ</u>

ກ. <u>ທາງດ້ານປະລິມານ</u>

ແມ່ນການວິເຄາະຂໍ້ມູນຕົວເລກທາງດ້ານສະຖິຕິ ໂດຍນຳໃຊ້ program computer Microsoft excel ແລະ ໃຊ້ programes ອື່ນໆ ເພື່ອວິເຄາະຂໍ້ມູນທາງດ້ານເສດຖະກິດ - ສັງຄົມ ເຊັ່ນ: ຄ່າສ່ວນຮ້ອຍ (percentage), ຄ່າສະເລ່ຍ (Mean) ແລະ ຄວາມຖີ່ (Frequency).

ຂ. <u>ທາງດ້ານຄຸນະພາບ</u>

ເປັນການສັງລວມ ແລະ ວິເຄາະຈາກການສຶກສາຂໍ້ມູນທາງດ້ານເຫດຜົນນຳບັນດາອົງການ, ບໍລິສັດ, ບຸກຄົນ ແລະ ການສັງເກດເບິ່ງສະພາບທົ່ວໄປຂອງເຂດທີ່ລົງສຶກສາ.

## 3. <u>ສະຖານທີ່ການສຶກສາ</u>

ການສຶກສາແມ່ນ ສຶກສາຢູ່ 2 ບ້ານຄື: ບ້ານປະຈຸດອນ ແລະ ບ້ານພໍ່ເບີຍ, ເມືອງຕະໂອ້ຍ, ແຂວງສາລະວັນ.

## 4. ໄລຍະການສຶກສາ

ເລີ່ມຕັ້ງແຕ່ວັນທີ 20/03/2011 - 20/05/2011.

## 5. ຂອບເຂດການສຶກສາ

- ຂໍ້ມູນດ້ານເສດຖະກິດ - ສັງຄົມ
- ສະພາບການສຳປະທານທີ່ດິນ
- ປັດໄຈຕ່າງໆທີ່ມີຜົນກະທົບຕໍ່ການດຳລົງຊີວິດຂອງປະຊາຊົນ
- ເຂົ້າກິນຂອງປະຊາຊົນ
- ສະພາບແວດລ້ອມ
- ການນຳໃຊ້ທີ່ດິນ
- ເຄື່ອງປ່າຂອງດົງ
- ການປ່ຽນແປງຮູບແບບໃນການຜະລິດກະສິກຳ
- ການປູກພືດ
- ການລ້ຽງສັດ

# ຜົນໄດ້ຮັບ

## 1. ຂໍ້ມູນທາງດ້ານເສດຖະກິດ - ສັງຄົມ

### 1.1. ຂໍ້ມູນຜູ້ທີ່ຖືກສຳພາດ

ການສຶກສາເຫັນວ່າ ຊາວກະສິກອນທີ່ໃຫ້ຂໍ້ມູນໃນເວລາສຳພາດມີອາຍຸຕໍ່າສຸດແມ່ນ 16 ປີ ແລະ ອາຍຸສູງສຸດ 75 ປີ ຖ້າຈັດເປັນກຸ່ມຄື: ກຸ່ມອາຍຸ 22 ປີລົງໄປ ມີຈຳນວນ 2 ຄົນ ເທົ່າກັບ 3,33%, ກຸ່ມອາຍຸແຕ່ 23 - 45 ປີ ຈຳນວນ 37 ຄົນ ເທົ່າກັບ 61,66%, 45 – 60 ປີ ມີຈຳນວນ 19 ຄົນ ເທົ່າກັບ 31,66% ແລະ ກຸ່ມອາຍຸທີ່ສູງກວ່າ 60 ປີ ມີຈຳນວນ 2 ຄົນ ເທົ່າກັບ 3,33%, ຈຳນວນທີ່ຖືກສຳພາດທັງໝົດມີ 60 ຄອບຄົວ ເທົ່າກັບ 32% ຂອງຈຳນວນຄອບຄົວທັງໝົດຂອງ 2 ບ້ານເປົ້າໝາຍ.

### 1.2. ຈຳນວນສະມາຊິກໃນຄອບຄົວທີ່ຖືກສະພາດ

ຈາກການສຳພາດ 60 ຄອບຄົວ, ຄອບຄົວທີ່ມີຈຳນວນສຳມາຊິກໜ້ອຍສຸດແມ່ນ 2 ຄົນ ແລະ ຫຼາຍສຸດແມ່ນ 13 ຄົນ ໃນນັ້ນຈຳນວນສະມາຊິກຕັ້ງແຕ່ 2 - 4 ຄົນ ມີ 12 ຄອບຄົວ (20%), ຈຳນວນສຳມາຊິກຕັ້ງແຕ່ 5 - 7 ຄົນ ມີ 28 ຄົນ (46%) ແລະ ຈຳນວນສຳມາຊິກຕັ້ງແຕ່ 8 ຄົນຂຶ້ນໄປ ມີ 20 ຄອບຄົວ (34%), ໂດຍສະເລ່ຍແລ້ວແມ່ນ 7 ຄົນ/ຄອບຄົວ ເຊິ່ງຖືວ່າເປັນຄອບຄົວໃຫຍ່, ຈາກການສຶກສາ 60 ຄອບຄົວເປົ້າໝາຍເຫັນວ່າ: ມີຈຳນວນປະຊາກອນ 403 ຄົນ, ຍິງ 202 ຄົນ, ລາຍລະອຽດເບິ່ງຕາມຕາຕະລາງລຸ່ມນີ້.

**ຕາຕະລາງ 1.** ສະແດງຄວາມຖີ່ຊ່ວງອາຍຸຂອງສຳມາຊິກຄອບຄົວທີ່ຖືກສຳພາດ

| ລ/ດ | ຄວາມຖີ່ຂອງຊ່ວງອາຍຸ (ປີ) | ຈຳນວນ (ຄົນ) | ເປີເຊັນ (%) |
|---|---|---|---|
| 1 | ອາຍຸ 0 - 6 ປີ | 112 | 27,79 |
| 2 | ອາຍຸ 7 - 11 ປີ | 51 | 12,65 |
| 3 | ອາຍຸ 12 - 18 ປີ | 66 | 16,37 |
| 4 | ອາຍຸ 19 - 22 ປີ | 24 | 5,95 |
| 5 | ອາຍຸ 23 - 45 | 72 | 17,86 |
| 6 | ອາຍຸ 46 - 60 | 71 | 17,61 |
| 7 | ອາຍຸຫຼາຍກວ່າ 60 ປີ | 7 | 1,73 |
| 8 | ລວມ | 403 | 99,96 |

### 1.3 ຈຳນວນພົນລະເມືອງ, ຄອບຄົວ ແລະ ຫຼັງຄາເຮືອນທັງໝົດ

ບ້ານປະຈຸດອນມີຈຳນວນຫຼັງຄາເຮືອນທັງໝົດ 103 ຫຼັງຄາເຮືອນ, ມີ 127 ຄອບຄົວ, ມີພົນລະເມືອງທັງໝົດ 713 ຄົນ ແລະ ຍິງ 354 ຄົນ ສ່ວນບ້ານພໍ່ເບີຍແມ່ນມີ 63 ຫຼັງຄາເຮືອນ ແລະມີ 63 ຄອບຄົວ, ພົນລະເມືອງທັງໝົດ 359 ຄົນ ແລະ ຍິງ 183 ຄົນ.

### 1.4. ການສຶກສາ

ຈາກການສຶກສາເຫັນວ່າ: ຈຳນວນຜູ້ທີ່ບໍ່ຮຽນໜັງສືມີ 238 ຄົນ (58%), ຈຳນວນຜູ້ທີ່ຮຽນຊັ້ນປະຖົມມີ 154 ຄົນ (38%), ຈຳນວນຜູ້ທີ່ຮຽນຈົບຊັ້ນປະຖົມມີ 14 ຄົນ (3%) ແລະ ຈຳນວນຜູ້ທີ່ຮຽນຈົບຊັ້ນມັດທະຍົມຕົ້ນມີ 5 ຄົນ (1%), ລາຍລະອຽດເບິ່ງຕາມຕາຕະລາງລຸ່ມນີ້:

**ຕາຕະລາງ 2.** ການຈັດລະດັບການສຶກສາ

| ລ/ດ | ລະດັບການສຶກສາ | ຈຳນວນຄົນ | ເປີເຊັນ (%) |
|---|---|---|---|
| 1 | ຈຳນວນທີ່ບໍ່ຮຽນໜັງສື | 238 | 58 |
| 2 | ຈຳນວນທີ່ຮຽນຊັ້ນປະຖົມ | 154 | 38 |
| 3 | ຈຳນວນທີ່ຮຽນຈົບຊັ້ນປະຖົມ | 14 | 3 |
| 4 | ຈຳນວນທີ່ຈົບຊັ້ນມັດທະຍົມຕົ້ນ | 5 | 1 |

### 1.5. ບົດບາດຍິງຊາຍ

ແມ່ຍິງ ແລະ ຜູ້ຊາຍ ແມ່ນມີສິດບໍ່ເທົ່າທຽມກັນ, ຜູ້ຊາຍແມ່ນມີສິດຕັດສິນໃຈ ສ່ວນແມ່ຍິງແມ່ນພຽງແຕ່ປະຕິບັດຕາມ, ແມ່ຍິງແມ່ນເຮັດວຽກໜັກກວ່າຜູ້ຊາຍເຊັ່ນ: ໜຶ້ງເຂົ້າ, ຕັກນ້ຳ, ຫາຟືນ, ແຕ່ງກິນ, ສັກເຂົ້າໄຮ່, ເວລາເກີດລູກກໍແມ່ນໄປເກີດຢູ່ໃນປ່າຄົນດຽວ ສ່ວນຜູ້ຊາຍຈະເຮັດ ຫຼື ບໍ່ເຮັດກໍໄດ້.

### 1.6. ສາສະໜາ ແລະ ຄວາມເຊື່ອ

ປະຊາຊົນທັງສອງບ້ານ ແມ່ນເປັນຊົນເຜົ່າລາວເທີງ, ນັບຖືສາສະໜາຜີ, ມີຄວາມເຊື່ອໃນເລື່ອງຜີ, ບຸນປະເພນີຂອງເຜົ່າລາວເທີງໄດ້ແກ່: ບຸນກິນງະ ແລະ ບຸນລະປີບ ການປະກອບພິທີທາງສາສະໜາ ແມ່ນມີຄ່າໃຊ້ຈ່າຍສູງຫຼາຍ ແລະ ເປັນສິ່ງຈຳເປັນສຳລັບເຂົາເຈົ້າ.

## 2. ສະພາບຂອງການສຳປະທານທີ່ດິນ

### 2.1. ສະພາບທົ່ວໄປຂອງການສຳປະທານທີ່ດິນ

ການສຳປະທານທີ່ດິນຂອງ ບໍລິສັດເພັດດາລາການກະເສດຄົບວົງຈອນ ເຊິ່ງເປັນບໍລິສັດທີ່ເຊົ່າສຳປະທານທີ່ດິນຢູ່ ເມືອງຕະໂອ້ຍ ແຂວງສາລະວັນ ແມ່ນໄດ້ດຳເນີນການສຳຫຼວດມາຕັ້ງແຕ່ ປີ 2006, ຕໍ່ມາໃນປີ 2007 ແມ່ນໄດ້ບຸກເບີກ ແລະ ປູກໝາກເຍົາ ແຕ່ຍັງບໍ່ທັນໄດ້ເກັບຜົນ

ຜະລິດ ບໍລິສັດກໍໄດ້ປ່ຽນມາເປັນການປູກມັນຕົ້ນແທນ. ການປ່ຽນແປງກະທັນຫັນນີ້ ສາເຫດສ່ວນໜຶ່ງແມ່ນເກີດມາຈາກ (ນາຍທຶນ ຈາກປະເທດຈີນ) ທີ່ເປັນຜູ້ໃຫ້ທຶນໄດ້ເຫັນວ່າການປູກໝາກເຍົາແມ່ນມີຜົນຜະລິດໜ້ອຍກວ່າການປູກມັນຕົ້ນ, ຍ້ອນບັນຫາຄວາມຕ້ອງການຂອງຕະຫຼາດໂລກ ທີ່ເລັງໃສ່ມັນຕົ້ນເປັນສ່ວນໃຫຍ່, ປີ 2009 ເປັນຕົ້ນມາແມ່ນໄດ້ດໍາເນີນການບຸກເບີກເນື້ອທີ່ຕື່ມ ເພື່ອປູກມັນຕົ້ນ ແຕ່ກໍຍັງບໍ່ທັນໄດ້ເກັບກ່ຽວຜົນຜະລິດ, ອາຍຸຂອງການສໍາປະທານແມ່ນ 50 ປີ ເນື້ອທີ່ສໍາປະທານແມ່ນ 1.000 ha, ເນື້ອ ທີ່ບຸກເບີກໄດ້ແລ້ວແມ່ນ 600 ha, ບ້ານປະຈຸດອນ ບຸກເບີກໄດ້ແລ້ວ 100 ha ແລະ ບ້ານພໍ່ເບີຍ ແມ່ນໄດ້ຖືກບຸກເບີກເນື້ອທີ່ພຽງແຕ່ 2 ha ແລ້ວກໍຢຸດເຊົາໄປ, ໃນປີທໍາອິດທີ່ບໍລິສັດໄດ້ບຸກເບີກ ບ້ານປະຈຸດອນ ແມ່ນໄດ້ຮັບຄ່າຊົດເຊີຍແມ່ນ 1.000.000 ກີບ/ປີ, ໃຫ້ຄ່າແກ້ຮີດ 2 ເທື່ອ ລວມກັນເປັນເງິນ 2.000.000 ກີບ, ຄ່າຊົດເຊີຍທີ່ໄດ້ເປັນພຽງຄ່າຊົດເຊີຍໃຫ້ບ້ານ ແຕ່ບໍ່ແມ່ນຂອງຄອບຄົວ ຫຼື ບຸກຄົນ ແຕ່ສໍາລັບບ້ານພໍ່ເບີຍ ແມ່ນບໍ່ໄດ້ຮັບຄ່າຊົດເຊີຍຫຍັງໝົດ, ໃນໄລຍະທີ່ຜ່ານມາກິດຈະກໍາຕ່າງໆຂອງ ບໍລິສັດເພັດດາລາການກະເສດຄົບວົງຈອນແມ່ນມີດັ່ງນີ້:

**ຕາຕະລາງ 3.** ສະແດງກິດຈະກໍາຕ່າງໆຂອງບໍລິສັດເພັດດາລາ

| ລ/ດ | ກິດຈະກໍາ | ປີເລີ່ມຕົ້ນ | ປີສິ້ນສຸດ |
|---|---|---|---|
| 1 | ເລີ່ມຕົ້ນສໍາຫຼວດ | ຕົ້ນປີ 2006 | ທ້າຍປີ 2006 |
| 2 | ບຸກເບີກ | 2007 | ປະຈຸບັນ |
| 3 | ປູກໝາກເຍົາ | ທ້າຍປີ 2007 | 2009 |
| 4 | ປູກມັນຕົ້ນ | 2010 | ປະຈຸບັນ |

### 2.2. ປະເພດດິນທີ່ມີການສໍາປະທານ

ໃນປະຈຸບັນບໍລິສັດ ແມ່ນສືບຕໍ່ບຸກເບີກເນື້ອທີ່ຫຼາຍຂຶ້ນກວ່າເກົ່າ ເພື່ອປູກມັນຕົ້ນ, ພື້ນທີ່ໆມີການສໍາປະທານ ແມ່ນເປັນດິນປະເພດດິນປ່າເລົ່າ, ປ່າຊົມໃຊ້, ທົ່ງຫຍ້າລ້ຽງສັດ ແລະ ຈໍານວນໜຶ່ງແມ່ນຖືກພື້ນທີ່ເຮັດການຜະລິດຂອງປະຊາຊົນ ເຊິ່ງມີຈໍານວນ 15 ຄອບຄົວ ທີ່ມີດິນຖືກດຸດ, ເນື້ອຂອງປະຊາຊົນທີ່ຖືກດຸດທັງໝົດແມ່ນ 17,41 ha (ເນື້ອທີ່ໄຮ່ຖືກດຸດ 10,02 ha, ເນື້ອທີ່ນາຖືກດຸດ 1,29 ha ແລະ ເນື້ອທີ່ສວນຖືກດຸດ 6,1 ha), ໃນນັ້ນມີ 6 ຄອບຄົວ ທີ່ບໍ່ຍິນດີໃຫ້ທາງບໍລິສັດດຸດ ເພາະເຂົາເຈົ້າໄດ້ປູກພືດໃສ່ເຊັ່ນ: ຕົ້ນຢາງບົງ, ຕົ້ນກະຖິນນາລົງ, ຕົ້ນກ້ວຍ, ຕົ້ນໝາກນັດ ແລະ ອື່ນໆ.

ການສຶກສາພົບວ່າ: ມີ 18 ຄອບຄົວ (30%) ທີ່ເຫັນດີໃຫ້ມີການສໍາປະທານ ເພາະເຂົາເຈົ້າຄິດວ່າການສໍາປະທານ ແມ່ນເຮັດໃຫ້ເຂົາເຈົ້າມີອາຊີບໃໝ່ ແລະ ຍັງເປັນການສ້າງລາຍຮັບໃຫ້ກັບຄອບຄົວໄດ້ຫຼາຍກວ່າການຖາງປ່າເຮັດໄຮ່, ມີເສັ້ນທາງຄົມມະນາຄົມທີ່ສະດວກສະບາຍຫຼາຍ

ກວ່າແຕ່ກ່ອນ, ຜົນຜະລິດທີ່ໄດ້ຈາກການປູກມັນຕົ້ນ ແມ່ນສາມາດຂາຍໃຫ້ກັບບໍລິສັດ ເຮັດໃຫ້ຄ່າຂົນສົ່ງໜ້ອຍລົງ, ການສຳປະທານແມ່ນເຮັດໃຫ້ເຂົາເຈົ້າມີວຽກເຮັດງານທຳຫຼາຍຂຶ້ນ, ສາມາດເຂົ້າໄປເຮັດວຽກນຳບໍລິສັດ.

ມີ 15 ຄອບຄົວ (25%) ທີ່ບໍ່ເຫັນດີນຳການສຳປະທານ ເນື່ອງຈາກວ່າ ການສຳປະທານ ເຮັດໃຫ້ຊຸມຊົນແອອັດບໍ່ມີຄວາມເປັນອິດສະຫຼະພາບທາງດ້ານສິດຄອບຄອງທີ່ດິນ ເພື່ອເຮັດການຜະລິດ ແລະ ໄດ້ຮັບຜົນຜະລິດຕ່ຳ ເພາະຕ້ອງເຮັດຢູ່ໃນພື້ນທີ່ເດີມທຸກປີ. ນອກນັ້ນ ການສຳປະທານຍັງເຮັດໃຫ້ພື້ນທີ່ທຳມາຫາກິນຂອງປະຊາຊົນຫຼຸດລົງ, ປ່າໄມ້ທີ່ສາມາດນຳໃຊ້ເຂົ້າໃນຊີວິດປະຈຳວັນມີໜ້ອຍລົງ, ເມື່ອປ່າໄມ້ຫຼຸດລົງກໍເຮັດໃຫ້ສັດປ່າໜີໄປຢູ່ບ່ອນໃໝ່ ແລະ ບໍ່ສາມາດຫາສັດປ່າໄດ້ອີກ.

ມີ 22 ຄອບຄົວ (36,66%) ທີ່ເຫັນດີໃຫ້ບໍລິສັດມາສຳປະທານ ແຕ່ຕ້ອງຢູ່ໃນເງື່ອນໄຂທີ່ວ່າ ຫຼັງຈາກທີ່ສຳປະທານໄປແລ້ວບໍລິສັດຕ້ອງໄດ້ເຮັດໃຫ້ປະຊາຊົນມີວຽກເຮັກງານທຳ, ເຮັດໃຫ້ບ້ານມີຄວາມຈະເລີນ ແລະ ພັດທະນາຂຶ້ນກວ່າເກົ່າ.

ມີ 5 ຄອບຄົວ (8,33%) ທີ່ບໍ່ມີຄຳຄິດເຫັນ ເນື່ອງຈາກວ່າ ບໍ່ເຂົ້າໃຈກ່ຽວກັບການສຳປະທານ.

**ຕາຕະລາງ 4.** ສະແດງຄຳຄິດເຫັນຂອງປະຊາຊົນຕໍ່ກັບການສຳປະທານ

| ລ/ດ | ຄຳຄິດເຫັນ | ຈຳນວນ (ຄອບຄົວ) | ເປີເຊັນ (%) |
|---|---|---|---|
| 1 | ເຫັນດີນຳການສຳປະທານ | 18 | 30 |
| 2 | ບໍ່ເຫັນດີນຳການສຳປະທານ | 15 | 25 |
| 3 | ເຫັນດີຖ້າຊີວິດການເປັນຢູ່ດີຂຶ້ນ | 22 | 36,66 |
| 4 | ບໍ່ມີຄຳຄິດເຫັນ | 5 | 8,33 |

### 2.3. <u>ຜົນກະທົບຈາກການສຳປະທານ</u>

ການສຶກສາພົບວ່າມີປະຊາຊົນຈຳນວນ 51,66% ເວົ້າວ່າການສຳປະທານ ໄດ້ເຮັດໃຫ້ນ້ຳທຳມະຊາດບົກແຫ້ງຫຼາຍ, 30% ເວົ້າວ່າເກີດມີໄພແຫ້ງແລ້ງ, 6,66% ມີໄຟໄໝ້ປ່າ, 70% ມີນ້ຳຖ້ວມ, 68,33% ມີລົມພາຍຸ ແລະ ປະຊາຊົນ 80% ທີ່ເວົ້າວ່າອາກາດມີການປ່ຽນແປງຫຼາຍ, ພື້ນທີ່ການທຳມາຫາກິນຂອງປະຊາຊົນຫຼຸດລົງ ຈຳນວນອາຫານທີ່ຫາໄດ້ໜ້ອຍລົງກວ່າແຕ່ກ່ອນ ເຊິ່ງວ່າໃນເມື່ອກ່ອນພື້ນທີ່ດັ່ງກ່າວ ແມ່ນເປັນບ່ອນທຳມາຫາກິນຂອງປະຊາຊົນເຊັ່ນ: ເກັບຜັກປ່າ, ຫາໜໍ່ໄມ້, ເກັບເຫັດ, ຫາເຫຼັກ ແລະ ຍັງເປັນທັງບ່ອນລ້ຽງສັດນຳອີກ ແຕ່ດຽວນີ້ແມ່ນບໍ່ສາມາດໄປຫາກິນບ່ອນນັ້ນໄດ້ອີກແລ້ວ ຍ້ອນທາງບໍລິສັດໄດ້ເຮັດຮົ້ວອ້ອມ ແລະ ຫ້າມບໍ່ໃຫ້ປະຊາຊົນເຂົ້າໄປຫາກິນໃນເຂດນັ້ນ.

ປະຊາຊົນ ແມ່ນມີຄວາມກັງວົນຫຼາຍໃນການລ້ຽງສັດເຊັ່ນ: ງົວ, ຄວາຍ ແລະ ແບ້ ເພາະຢ້ານສັດລ້ຽງຂອງຕົນເຂົ້າໄປທຳລາຍຜົນລະປູກຂອງບໍລິສັດ ແລ້ວຖືກປັບໄໝຍ້ານບໍ່ມີເງິນເສຍໃຫ້ບໍລິສັດ ຕໍ່ກັບບັນຫາດັ່ງກ່າວເຮັດໃຫ້ປະຊາຊົນບໍ່ຢາກລ້ຽງສັດປະເພດນີ້ອີກ.

### 2.4. <u>ຂໍ້ຂັດແຍ່ງລະຫວ່າງບໍລິສັດກັບປະຊາຊົນ</u>

- ບໍລິສັດ: ຈາກການສຶກສາພົບວ່າ ທາງບໍລິສັດໄດ້ອະທິບາຍວ່າ ພາຍຫຼັງທີ່ມີການສຳປະທານ ປະຊາຊົນຈຳນວນໜຶ່ງແມ່ນບໍ່ໃຫ້ຄວາມຮ່ວມມືຕໍ່ກັບການບຸກເບີກເນື້ອທີ່ ເພື່ອປູກມັນຕົ້ນ, ມີການຄັດຄ້ານບໍ່ໃຫ້ບໍລິສັດດຸດດິນທີ່ຖືວ່າທາງບໍລິສັດໄດ້ສຳປະທານໄປກ່ອນແລ້ວ ເຮັດໃຫ້ເກີດມີຄວາມຫຍຸ້ງຍາກ, ປະຊາຊົນກັບບໍລິສັດແມ່ນບໍ່ເຂົ້າໃຈກັນ.

- ປະຊາຊົນ: ເວົ້າວ່າ ບໍລິສັດບໍ່ປະຕິບັດຕາມສັນຍາ ເລື່ອງຄ່າແຮງງານທີ່ປະຊາຊົນໄດ້ໄປເຮັດວຽກນຳທາງບໍລິສັດ ເຊິ່ງໃນເບື້ອງຕົ້ນທາງບໍລິສັດແມ່ນໄດ້ຕົກລົງກັນໄວ້ວ່າຈະໃຫ້ຄ່າຈ້າງຜູ້ໜຶ່ງ 25.000 ກີບ/ມື້ ແລະ ລ້ຽງເຂົ້າ 1 ຄາບ ແຕ່ສຸດທ້າຍແມ່ນໄດ້ຄ່າຈ້າງພຽງແຕ່ 6.000 ກີບ/ມື້ທັງຍັງບໍ່ໄດ້ລ້ຽງເຂົ້າ ເຮັດໃຫ້ປະຊາຊົນບໍ່ພໍໃຈ ແລະ ບໍ່ຢາກເຮັດວຽກນຳທາງບໍລິສັດນັ້ນອີກ, ບໍລິສັດແມ່ນມີແຕ່ແຜນການ ແຕ່ບໍ່ມີການຈັດຕັ້ງປະຕິບັດຕໍ່ສັນຍາທີ່ຕົກລົງກັນໄວ້, ປະຊາຊົນແມ່ນບໍ່ມີຄວາມເຊື່ອໝັ້ນນຳບໍລິສັດ ເພາະທີ່ຜ່ານມາໃນໄລຍະທີ່ປູກໝາກເຍົາແມ່ນບໍ່ໄດ້ຮັບຜົນສຳເລັດ.

## 3. ປັດໄຈຕ່າງໆທີ່ມີຜົນກະທົບຕໍ່ການດຳລົງຊີວິດຂອງປະຊາຊົນ

### 3.1. <u>ບັນຫາເຂົ້າກຸ້ມກິນ</u>

ຈາກການສຶກສາເຫັນວ່າ ເຂົ້າກຸ້ມກິນຕ່ຳສຸດ 1 ເດືອນ ແລະ ເຂົ້າກຸ້ມກິນສູງສຸດແມ່ນ 12 ເດືອນ, ກ່ອນການສຳປະທານເຫັນວ່າ ຈຳນວນຄອບຄົວທີ່ມີເຂົ້າກຸ້ມກິນແຕ່ 1 - 3 ເດືອນ ມີ 18 ຄອບຄົວ (30%), ຈຳນວນຄອບຄົວທີ່ເຂົ້າກຸ້ມກິນ 4 - 7 ເດືອນ ມີ 27 ຄອບ ຄົວ (45%) ແລະ ຈຳນວນຄອບຄົວທີ່ມີເຂົ້າກິນຫຼາຍກວ່າ 7 ເດືອນຂຶ້ນໄປ ມີ 6 ຄອບຄົວ (25%).

ໃນປະຈຸບັນເຫັນວ່າ ຈຳນວນຄອບຄົວທີ່ມີເຂົ້າກຸ້ມກິນແຕ່ 1 - 3 ເດືອນ ມີ 35 ຄອບຄົວ (58,33%), ເຫັນວ່າປະຊາຊົນບໍ່ມີເຂົ້າກິນເພີ່ມຂຶ້ນ 28,33%, ຈຳນວນຄອບຄົວທີ່ມີເຂົ້າກຸ້ມກິນ 4 - 7 ເດືອນ ມີ 19 ຄອບຄົວ (31,67%), ປະຊາຊົນບໍ່ມີເຂົ້າກິນເພີ່ມຂຶ້ນ 13,33% ແລະ ຈຳນວນຄອບຄົວທີ່ມີເຂົ້າກິນຫຼາຍກວ່າ 7 ເດືອນຂຶ້ນໄປ ມີ 6 ຄອບຄົວ (10%), ປະຊາຊົນບໍ່ມີເຂົ້າກິນເພີ່ມຂຶ້ນ 15%.

**ຕາຕະລາງ 5.** ສະແດງກຸ່ມຄອບຄົວທີ່ມີເຂົ້າກຸ້ມກິນຕາມແຕ່ລະໄລຍະ

| ລ/ດ | ໄລຍະເຂົ້າກຸ້ມກິນ | ຈ/ນຄອບຄົວເຂົ້າກຸ້ມກິນແຕ່ລະໄລຍະ | ເປີເຊັນ (%) |
|---|---|---|---|
| 1 | 0 - 3 ເດືອນ | 35 | 58,33 |
| 2 | 4 - 7 ເດືອນ | 19 | 31,67 |
| 3 | > 7 ເດືອນ | 6 | 10 |

**ຕາຕະລາງ 6.** ປຽບທຽບຄອບຄົວທີ່ມີເຂົ້າກຸ້ມກິນກ່ອນ ແລະ ຫຼັງສຳປະທານ

| ລ/ດ | ໄລຍະເຂົ້າກຸ້ມກິນ | ຈ/ນຄອບຄົວເຂົ້າກຸ້ມກິນກ່ອນສຳປະທານ | ເປີເຊັນ (%) | ຈ/ນຄອບຄົວເຂົ້າກຸ້ມກິນຫຼັງສຳປະທານ | ເປີເຊັນ (%) | ເຂົ້າກຸ້ມກິນເພີ່ມຂຶ້ນ ຫຼື ຫຼຸດລົງເປີເຊັນ (%) | ໝາຍເຫດ |
|---|---|---|---|---|---|---|---|
| 1 | 1 - 3 ເດືອນ | 18 | 30 | 35 | 58,33 | 28,33 | ຫຼຸດລົງ |
| 2 | 4 - 7 ເດືອນ | 27 | 45 | 19 | 31,67 | 13,33 | ຫຼຸດລົງ |
| 3 | >7 ເດືອນ | 15 | 25 | 6 | 10 | 15 | ຫຼຸດລົງ |

### 3.2. ການປູກພືດ ແລະ ການປັບປຸງດິນ

ກ. ການປູກພືດ

ການປູກພືດສ່ວນໃຫຍ່ແມ່ນອີງໃສ່ທຳມະຊາດ ຖ້າບ່ອນໃດມີຄວາມອຸດົມສົມບູນຫຼາຍຜົນຜະລິດກໍໄດ້ຫຼາຍ, ບັນຫາຂອງການປູກພືດສ່ວນໃຫຍ່ແມ່ນດິນບໍ່ງາມ, ມີພື້ນທີ່ຮາບພຽງໜ້ອຍ, ມີວັດຊະພືດຂຶ້ນປົກຄຸມຜົນລະປູກ, ພື້ນທີ່ການຜະລິດມີຈຳກັດ, ໃນພື້ນທີ່ປູກເຂົ້າໄຮ່ ແມ່ນຍັງມີລະເບີດທີ່ບໍ່ທັນແຕກຕົກຄ້າງຢູ່ ເຮັດໃຫ້ມີຄວາມສ່ຽງ ແລະ ເກີດອັນຕະລາຍຕໍ່ປະຊາຊົນໃນເຂດນັ້ນ, ສັດປ່າ ແລະ ແມງໄມ້ເຂົ້າທຳລາຍຜົນລະປູກເຊັ່ນ: ເພ້ຍຕ່າງໆ, ໜູ, ໝູປ່າ ແລະ ອື່ນໆ. ນອກຈາກນີ້ ແນວພັນທີ່ນຳໃຊ້ເຂົ້າໃນການປູກ ແມ່ນເປັນພັນພື້ນເມືອງ, ປະຊາຊົນບໍ່ນິຍົມໃຊ້ແນວພັນທີ່ທາງໂຄງສົ່ງເສີມໃຫ້ປູກ ເຮັດໃຫ້ປະສິດທິພາບຂອງຜົນຜະລິດຕ່ຳ, ບັນດາເຕັກນິກຕ່າງໆແມ່ນຍັງບໍ່ທັນສະໃໝ ແລະ ບໍ່ເໝາະສົມ, ຍັງນຳໃຊ້ເຕັກນິກອັນເກົ່າເຊັ່ນ: ການໃຊ້ຈົກຂຸດນາ, ປະ

ຊາຊົນບໍ່ນໍາໃຊ້ແຮງງານສັດເຂົ້າເຂົ້າໃນການຜະລິດ ເພື່ອເປັນການຫຼຸດຜ່ອນແຮງງານຂອງຄົນ ເພາະມີຄວາມເຊື່ອວ່າຈະເຮັດໃຫ້ບໍ່ໄດ້ຮັບຜົນຜະລິດສູງ.

ຂ. ດ້ານການປັບປຸງດິນ

ຜົນການສຶກສາພົບວ່າມີ 11 ຄອບຄົວ (18,33%) ທີ່ອາໃສເສດພືດທີ່ໄດ້ຈາກການຖາງປ່າແລ້ວຈູດ ເຮັດໃຫ້ເປັນຝຸ່ນປັບປຸງດິນ ເພື່ອປູກເຂົ້າໄຮ່ໃນແຕ່ລະປີ, ເຂົາເຈົ້າຈະບໍ່ນໍາໃຊ້ຝຸ່ນຄອກ ເພາະຖືວ່າຜິດຮີດ, 35 ຄອບຄົວ (58,34%) ແມ່ນໃສ່ຝຸ່ນຄອກ ແລະ ຝຸ່ນທີ່ມີຢູ່ໃນໄຮ່, ມີ 14 ຄອບຄົວ (23,33%) ທີ່ມີບາງປີກໍໃສ່ ແລະ ບາງປີກໍບໍ່ໃສ່ ຍ້ອນບໍ່ມີພາຫະນະຂົນສົ່ງ, ໄຮ່ຢູ່ໄກຈາກບ້ານ ແລະ ເອົາໄປຍາກ. ການຜະລິດເຂົ້າໄຮ່ຂອງປະຊາຊົນໃນເຂດນັ້ນ ແມ່ນຈະບໍ່ໄດ້ນໍາໃຊ້ຝຸ່ນວິທະຍາສາດເລີຍ ເນື່ອງຈາກວ່າ ບໍ່ມີເງິນຊື້, ບໍ່ເຄີຍໃຊ້ ແລະ ໃຊ້ຍາກ.

## 3.3. ການລ້ຽງສັດ

ດ້ານການລ້ຽງສັດ ແມ່ນມີຄວາມຫຍຸ້ງຍາກ ແລະ ພົບບັນຫາຫຼາຍຢ່າງເປັນຕົ້ນ ແມ່ນພື້ນທີ່ໃນການລ້ຽງສັດແມ່ນມີຈໍາກັດ, ສັດລ້ຽງສ່ວນໃຫຍ່ແມ່ນຕາຍຍ້ອນເກີດພະຍາດເຊັ່ນ: ງົວ, ຄວາຍ ແລະ ແບ້ ແມ່ນເປັນພະຍາດປາກເປື່ອຍລີງເລັບ, ເປັນທ້ອງເບັງ, ສໍາລັບໝູ ແມ່ນມັກເກີດພະຍາດຖອກທ້ອງ ສ່ວນສັດປີກແມ່ນເປັນພະຍາດຕາຍພາກ (ຕາຍຮ່າ), ນິວຄາເຊີນ ແລະ ອື່ນໆ, ສັດຈໍານວນໜຶ່ງແມ່ນເສຍ ແລະ ຕາຍຢູ່ໃນປ່າ.

ປະຊາຊົນ ແມ່ນຍັງຂາດການເອົາໃຈໃສ່ໃນການປ້ອງກັນພະຍາດ, ເຂົາເຈົ້າມີການລ້ຽງສັດແບບທໍາມະຊາດ, 87,35% ຍັງບໍ່ເຂົ້າໃຈເຖິງເຕັກນິກການລ້ຽງສັດທີ່ຖືກຕ້ອງ, ການລ້ຽງສ່ວນໃຫຍ່ແມ່ນອາໃສທໍາມະຊາດເປັນຕົ້ນຕໍ ແຕ່ກົງກັນຂ້າມລາຄາຂອງສັດລ້ຽງ ແມ່ນມີລາຄາແພງຂຶ້ນໂດຍສະເພາະແມ່ນສັດປີກເຊັ່ນ: ໄກ່ຜູ້ໃຫຍ່ ແມ່ນມີລາຄາ 50.000 ກີບ/ໂຕຂຶ້ນໄປ ແລະ ເປັດຜູ້ໃຫຍ່ ລາຄາ 100.000 ກີບ/ໂຕຂຶ້ນໄປ.

- ທົ່ງຫຍ້າລ້ຽງສັດ: ກ່ອນ ແລະ ຫຼັງການສໍາປະທານທົ່ງຫຍ້າທີ່ໃຊ້ລ້ຽງສັດ ແມ່ນບໍ່ມີການປັບປຸງທົ່ງຫຍ້າ, ບໍ່ມີການປູກຫຍ້າ ແລະ ພືດອາຫານສັດ, ເນື້ອທີ່ທົ່ງຫຍ້າທໍາມະຊາດແມ່ນຫຼຸດລົງເຊັ່ນ: ທົ່ງເຈມ ແມ່ນຍັງເຫຼືອປະມານ 45 ha (30%), ທົ່ງຕະລີ ຍັງເຫຼືອປະມານ 50 ha (45 %) ເນື່ອງຈາກວ່າ ບໍລິສັດໄດ້ບຸກເບີກເນື້ອທີ່ເພື່ອປູກມັນຕົ້ນ.

## 3.4. ແຫຼ່ງທຶນໃນການຜະລິດ

ຈາກການສຶກສາພົບວ່າ ແຫຼ່ງທຶນສ່ວນໜຶ່ງແມ່ນໄດ້ຈາກການໃຫ້ກູ້ຢືມເງິນຂອງທະນາຄານສົ່ງເສີມກະສິກໍາເມືອງຕະໂອ້ຍ ເພື່ອປູກຖົ່ວດິນ ເນື່ອງຈາກວ່າ ຢູ່ໃນຊ່ວງລະດູການຜະລິດປະຊາຊົນແມ່ນຂາດເຂົ້າກິນແລ້ວເອົາເງິນຈໍານວນນັ້ນໄປຊື້ເຂົ້າກິນເກືອບໝົດ ເຫຼືອໄວ້ຈໍານວນໜຶ່ງ, ສໍາລັບຖົ່ວດິນແມ່ນບໍ່ໄດ້ປູກເລີຍ ເຮັດໃຫ້ເຂົາເຈົ້າເກີດມີໜີ້, ທຶນສ່ວນໜຶ່ງແມ່ນໄດ້ຈາກການຂາຍສັດ, ການຫາເຄື່ອງປ່າຂອງດົງໄປຂາຍ ແລະ ໄດ້ຈາກການໄປຮັບຈ້າງ.

### 3.5. ລາຍຮັບ

ຄອບຄົວທີ່ມີລາຍຮັບຕ່ຳສຸດ 105.500 ກີບ/ປີ, ລາຍສູງສຸດ 5.750.000 ກີບ/ປີ, ລາຍຮັບສະເລ່ຍຍຕໍ່ຄອບຄົວ 2.224.783 ກີບ/ຄອບຄົວ/ປີ ແລະ ລາຍຮັບສະເລ່ຍຕໍ່ຄົນ 331.233 ກີບ/ຄົນ/ປີ.

ລາຍຮັບສະເລ່ຍຈາກການປູກເຂົ້າມີ 1.993.125 ກີບ/ຄອບຄົວ/ປີ, ຈາກການຂາຍສັດລ້ຽງ 691.633 ກີບ/ຄອບຄົວ/ປີ, ຮັບຈ້າງ 834.625 ກີບ/ຄອບຄົວ/ປີ, ຂາຍເຫຼັກ 116.475 ກີບ/ຄອບຄົວ/ປີ, ຂາຍເຄື່ອງປ່າຂອງດົງ 78.758 ກີບ/ຄອບຄົວ/ປີ ແລະ ລາຍຮັບອື່ນໆ 507.416 ກີບ/ຄອບຄົວ/ປີ.

### 3.6. ລາຍຈ່າຍ

ລາຍຈ່າຍຂອງປະຊາຊົນສ່ວນໃຫຍ່ ແມ່ນຈ່າຍເຂົ້າໃນການຊື້ເຂົ້າກິນ, ຊື້ເຄື່ອງນຸ່ງ, ເຄື່ອງໃຊ້ເຮືອນຄົວ, ຈັດງານປະເພນີຕ່າ: ບຸນກິນງະ ແລະ ບຸນລະປີບ ເຊິ່ງມີຂໍ້ມູນດັ່ງນີ້: ລາຍຈ່າຍຕ່ຳສຸດ 150.000 ກີບ/ປີ, ລາຍຈ່າຍສູງສຸດ 4.650.000 ກີບ/ປີ, ລາຍຈ່າຍທີ່ໃຊ້ເຂົ້າໃນການຊື້ເຄື່ອງນຸ່ງຮົ່ມສະເລ່ຍ 442.283 ກີບ/ຄອບຄົວ/ປີ, ລາຍຈ່າຍທີ່ໃຊ້ເຂົ້າໃນການຊື້ເຂົ້າກິນສະເລ່ຍ 844.916 ກີບ/ຄອບຄົວ/ປີ, ລາຍຈ່າຍທີ່ໃຊ້ເຂົ້າໃນການຈັດງານປະເພນີສະເລ່ຍ 246.966 ກີບ/ຄອບຄົວ/ປີ ແລະ ລາຍຈ່າຍທັງໝົດສະເລ່ຍ 1.534.166 ກີບ/ຄອບຄົວ/ປີ.

### 3.7. ອາຊີບ ແລະ ວຽກເຮັດງານທຳ

ປະຊາຊົນ ແມ່ນຈຳເປັນຕ້ອງໄດ້ໄປຊອກຫາວຽກເຮັດງານທຳຢູ່ບ່ອນອື່ນເຊັ່ນ: ຮັບເສຍຫຍ້າສວນ, ເກັບກາເຟ ຢູ່ເມືອງເລົ່າງາມ ແລະ ເມືອງປາກຊ່ອງ ເນື່ອງຈາກວ່າ ວຽກທີ່ເຮັດຢູ່ໃນທ້ອງຖິ່ນ (ເຮັດນຳບໍລິສັດເພັດດາລາ) ແມ່ນໄດ້ຮັບຄ່າຈ້າງຕ່ຳ, ຖືກໂກງແຮງງານ.

ອາຊີບເຮັດໄຮ່ມີ 60 ຄອບຄົວ (100%), ເຮັດນາມີ 17 ຄອບຄົວ (28,33%), ເຮັດສວນມີ 47 ຄອບຄົວ (78,33%), ຮັບຈ້າງ + ຫາເຄື່ອງປ່າຂອງດົງມີ 54 ຄອບຄົວ (90%) ແລະ ຄ້າຂາຍຍ່ອຍມີ 2 ຄອບຄົວ (3,33%).




**ຮູບ 1.** ສັດສ່ວນອາຊີບຕ່າງໆ

### 3.8. ປະເພດເຮືອນ

ການສຶກສາພົບວ່າ ເນື້ອທີ່ເຮືອນຕ່ຳສຸດແມ່ນ 15 $m^2$ ແລະ ເນື້ອທີ່ເຮືອນສູງສຸດແມ່ນ 63 $m^2$, ອາຍຸໃຊ້ງານຕ່ຳສຸດແມ່ນ 4 ປີ ແລະ ອາຍຸໃຊ້ງານສູງສຸດ 30 ປີ, ເຮືອນມຸງຫຍ້າມີ 19 ຫຼັງຄາ (31,67%), ມຸງສັງກະສີ 41 ຫຼັງຄາ (68,33%), ເຮືອນແອ້ມຝາໄມ້ປ່ອງ 27 ຫຼັງຄາ (45%), ເຮືອນແອ້ມແປ້ນ 33 ຫຼັງຄາ (55%), ເຮືອນປູຟາກ 18 ຫຼັງຄາ (30%), ເຮືອນປູແປ້ນ 42 ຫຼັງຄາ (70%), ລາຍລະອຽດເບິ່ງຕາມຕາຕະລາງດັ່ງນີ້:

**ຕາຕະລາງ 7.** ການຈັດປະເພດເຮືອນຕາມວັດສະດຸທີ່ໃຊ້

| ລ/ດ | ປະເພດເຮືອນ | ຈຳນວນ (ຫຼັງຄາ) | ຄິດເປັນເປີເຊັນ (%) |
|---|---|---|---|
| 1 | ເຮືອນມຸງຫຍ້າ | 19 | 31,67 |
| 2 | ເຮືອນມຸງສັງກະສີ | 41 | 68,33 |
| 3 | ເຮືອນແອ້ມຝາໄມ້ປ່ອງ | 27 | 45 |
| 4 | ເຮືອນແອ້ມແປ້ນ | 33 | 55 |
| 5 | ເຮືອນປູຟາກ | 18 | 30 |
| 6 | ເຮືອນປູແປ້ນ | 42 | 70 |

**ຕາຕະລາງ 8.** ການຈັດປະເພດເຮືອນຕາມຂະໜາດຂອງເຮືອນ

| ລ/ດ | ປະເພດເຮືອນ | ຈຳນວນ (ຫຼັງຄາ) | ເປີເຊັນ (%) |
|---|---|---|---|
| 1 | ເນື້ອທີ່ເຮືອນແຕ່ 15 - 35 $m^2$ | 28 | 46,67 |
| 2 | ເນື້ອທີ່ເຮືອນແຕ່ 36 - 45 $m^2$ | 24 | 40 |
| 3 | ເນື້ອທີ່ເຮືອນແຕ່ 46 ຂຶ້ນໄປ | 8 | 13,33 |

**ຕາຕະລາງ 9.** ການຈັດປະເພດເຮືອນຕາມອາຍຸການໃຊ້ງານ

| ລ/ດ | ຊ່ວງອາຍຸການໃຊ້ງານ | ຈຳນວນ (ຫຼັງຄາ) | ເປີເຊັນ (%) |
|---|---|---|---|
| 1 | ອາຍຸໃຊ້ງານແຕ່ 4 - 10 ປີ | 31 | 51,67 |
| 2 | ອາຍຸໃຊ້ງານແຕ່ 11 - 20 ປີ | 28 | 46,67 |
| 3 | ອາຍຸໃຊ້ງານແຕ່ 21 - 30 ປີ | 1 | 1,66 |

**3.9. <u>ການນຳໃຊ້ນ້ຳ</u>**

ປະຊາຊົນ ແມ່ນນຳໃຊ້ນ້ຳຝົນ, ນ້ຳເຊ ແລະ ນ້ຳບາດານ (ນ້ຳດື່ມ ແລະ ນ້ຳໃຊ້), ສຳລັບນ້ຳບາດານແມ່ນ ໄດ້ຮັບການຊ່ວຍເຫຼືອຈາກທາງໂຄງການ GAPE ໃນປີ 2005. ໃນເຂດສຶກສາພົບວ່າ: ມີບໍ່ນ້ຳບາດານທັງໝົດຈຳນວນ 10 ບໍ່, ໃນນັ້ນບໍ່ທີ່ຍັງສາມາດນຳໃຊ້ໄດ້ມີພຽງ 7 ບໍ່ ແລະອີກສ່ວນທີ່ເຫຼືອ 3 ບໍ່ ແມ່ນເປ່ເພບໍ່ສາມາດນຳໃຊ້ໄດ້ ໃນປະຈຸບັນແມ່ນຍັງບໍ່ທັນໄດ້ຮັບການປັບປຸງສ້ອມແປງຄືນ ເພື່ອໃຫ້ສາມາດນຳໃຊ້ໄດ້ຕາມປົກກະຕິ.

ປະຊາຊົນ ແມ່ນຍັງຂາດແຄນນ້ຳທີ່ຈະໃຊ້ເຂົ້າໃນການປູກພືດ ແລະ ລ້ຽງສັດ ເນື່ອງຈາກໃນຊ່ວງລະດູແລ້ງແຫຼ່ງນ້ຳທຳມະຊາດໄດ້ບົກແຫ້ງ, ປະຊາຊົນຕ້ອງການຢາກໃຫ້ມີລະບົບນ້ຳລິນ ແລະ ລະບົບນ້ຳຊົນລະປະທານ ເພື່ອວ່າຈະໄດ້ເຮັດການຜະລິດໄດ້ເຕັມເມັດເຕັມໜ່ວຍ.

**3.10. <u>ສາລະນຸປະໂພກ</u>**

- ໄຟຟ້າ: ຈາການສຳພາດຄອບຄົວທີ່ມີໄຟຟ້າໃຊ້ມີ 38 ຄອບຄົວ (63,33%).
- ເຄື່ອງໃຊ້ໄຟຟ້າ: ຈາກການສຳພາດພົບວ່າ 13 ຄອບຄົວ (21,67%) ມີໂທລະທັດ, 9 ຄອບຄົວ (15%) ມີຈານຮັບສັນຍານໂທລະພາບ, 14 ຄອບຄົວ (23,33%) ມີຊີດີ, 5 ຄອບຄົວ (8,33%) ມີພັດລົມ, 2 ຄອບຄົວ (3,33%) ມີຕູ້ເຢັນ ແລະ 6 ຄອບຄົວ (10%) ມີຕູ້ລຳໂພງ.
- ສາທາລະນະສຸກ: ມີສຸກສາລາ 1 ຫຼັງ, ແພດປະຈຳ 2 ຄົນ, ໃນເມື່ອກ່ອນແມ່ນບໍ່ທັນມີສຸກສາລາ ເຮັດໃຫ້ປະຊາຊົນບໍ່ສົນເຄີຍກັບການໄປກວດພະຍາດ ແລະ ການໄປປິ່ນປົວຢູ່ໂຮງໝໍ ສ່ວນໜຶ່ງແມ່ນຍັງອາໄສການເປົ່າ ຫຼື ແກ້ຮີດ.
- ເສັ້ນທາງຄົມມະນາຄົມ: ແມ່ນມີເສັ້ນທາງ ເລກທີ 15 A ຕັດຜ່ານ ແລະ ມີເສັ້ນທາງເຊື່ອມຕໍ່ກັບບ້ານໃກ້ຄຽງ ເຊິ່ງຫ່າງຈາກຕົວເມືອງຕະໂອ້ຍແມ່ນ 35 ກິໂລແມັດ ປະຈຸບັນແມ່ນກຳລັງຢູ່ໃນໄລຍະການກໍ່ສ້າງເສັ້ນທາງໃໝ່.

**3.11. <u>ການຄ້າ ແລະ ການບໍລິການ</u>**

- ຕະຫຼາດ ແລະ ຮ້ານຈຳໜ່າຍສິນຄ້າ: ໃນປະຈຸບັນ ແມ່ນຍັງບໍ່ທັນມີຕະຫຼາດຈຳໜ່າຍສິນຄ້າ ມີຮ້ານຈຳໜ່າຍສິນຄ້າຈຳນວນ 7 ຮ້ານ ເປັນຮ້ານຂາຍເຄື່ອງທົ່ວໄປ 6 ຮ້ານ ແລະຮ້ານສ້ອມແປງ 1 ຮ້ານ.
- ການສື່ສານ: ປະຈຸບັນ ແມ່ນມີສັນຍານໂທລະສັບ ເຮັດໃຫ້ສະດວກສະບາຍໃນການຕິດຕໍ່ສື່ສານກັບພາຍນອກໄດ້ໄວຂຶ້ນ ແລະ ການຮັບຮູ້ຂໍ້ມູນຂ່າວສານກໍໄວຂຶ້ນ.

**3.12. <u>ສັດປ່າ ແລະ ການເກັບເຄື່ອງປ່າຂອງດົງ</u>**

ສັດປ່າ ແລະ ເຄື່ອງປ່າຂອງດົງໃນເມື່ອກ່ອນ ແມ່ນມີຄວາມອຸດົມສົມບູນເຊັ່ນ: ສັດປ່າ (ໝູປ່າ, ກວາງ, ຟານ, ອົ້ນ, ຈຳພວກນົກຊະນິດຕ່າງໆ), ຜັກປ່າ (ຜັກກະໂດນ, ຜັກຕິ້ວ, ສະເມັກ, ຜັກກູດ, ຫວາຍ, ຕາວ ແລະ ອື່ນໆ) ແລະ ສັດນ້ຳ ແມ່ນມີຄວາມອຸດົມສົມບູນ ແຕ່ມາເຖິງປະຈຸບັນຈຳນວນສັດປ່າ, ສັດນ້ຳແມ່ນໄດ້ຫຼຸດລົງ, ຜັກ ແລະ ໜໍ່ໄມ້ ແມ່ນຖືວ່າຍັງຫາໄດ້ຢູ່ເຖິງແມ່ນວ່າພື້ນທີ່ສ່ວນໃຫຍ່ຈະຖືກດຸດ.

ຈາກການສຳພາດເຫັນວ່າ: ມີຈຳນວນ 34 ຄອບຄົວ (56,66%) ທີ່ເວົ້າວ່າ ສັດປ່າມີໜ້ອຍ, ມີຈຳນວນ 24 ຄອບຄົວ (40%) ທີ່ເຫັນວ່າ ສັດປ່າຍັງມີຫຼາຍ, 2 ຄອບຄົວ (3,33%) ທີ່ເຫັນວ່າ ສັດປ່າເກືອບບໍ່ມີເລີຍ, ມີ 54 ຄອບຄົວ (90%) ທີ່ເຫັນວ່າ ສັດນ້ຳມີໜ້ອຍ, ມີ 3 ຄອບຄົວ (5%) ທີ່ເຫັນວ່າ ສັດນ້ຳຍັງມີຫຼາຍ, ມີ 3 ຄອບຄົວ (5%) ທີ່ເຫັນວ່າ ສັດນ້ຳເກືອບບໍ່ມີເລີຍ, ມີ 22 ຄອບຄົວ (36,66%) ທີ່ເຫັນວ່າ ຜັກປ່າຍັງມີໜ້ອຍ, 37 ຄອບຄົວ (61,66%) ທີ່ເຫັນວ່າ ຜັກປ່າຍັງມີຫຼາຍ ແລະ ມີພຽງ 1 ຄອບຄົວ (1,66%) ທີ່ເຫັນວ່າຜັກປ່າເກືອບບໍ່ມີເລີຍ.

### 3.13. <u>ສະພາບແວດລ້ອມ</u>

ດິນຟ້າອາກາດມີການປ່ຽນແປງ, ຝົນຕົກບໍ່ຖືກຕ້ອງຕາມລະດູການ ສາເຫດແມ່ນຍ້ອນປ່າໄມ້ຖືກທຳລາຍ ແລະ ບໍ່ມີຕົ້ນໄມ້ໃຫຍ່, ການປູກຕົ້ນໄມ້ທົດແທນແມ່ນມີໜ້ອຍເມື່ອທຽບໃສ່ຕົ້ນໄມ້ທີ່ຖືກຕັດໄປ, ມັກເກີດໄພທຳມະຊາດໃນແຕ່ລະປີເຊັ່ນ: ໄຟໃໝ້ປ່າ, ອາກາດແຫ້ງແລ້ງ, ນ້ຳຖ້ວມ ແລະ ລົມພາຍຸ ແຕ່ຮ້າຍແຮງທີ່ສຸດແມ່ນພາຍຸເກດສະໜາ ປີ 2009 ທີ່ສົ່ງຜົນກະທົບຕໍ່ການດຳລົງຊີວິດຂອງປະຊາຊົນ ເປັນຕົ້ນແມ່ນ ບ້ານເຮືອນ, ເລົ້າເຂົ້າ, ສັດລ້ຽງ, ຜົນລະປູກຕ່າງໆຖືກນ້ຳພັດໄຫຼໄປ ຜົນທີ່ຕາມມາກໍຄືປະຊາຊົນຂາດທີ່ຢູ່ອາໃສ, ຂາດເຂົ້າກິນ, ເກີດພະຍາດ.

ປະຊາຊົນ ແມ່ນໄດ້ຮັບການຊ່ວຍເຫຼືອຈາກຫຼາຍໂຄງການເຊັ່ນ: ໂຄງການ VFI, ໂຄງການ FAO ແລະ ອົງການກາແດງລາວ ເຊິ່ງສິ່ງທີ່ຊາວບ້ານໄດ້ຮັບຈາກການຊ່ວຍເຫຼືອໄດ້ແກ່: ສະບຽງອາຫານ, ເຄື່ອງນຸ່ງຮົ່ມ, ເຄື່ອງໃຊ້ສອຍຕ່າງໆ, ເຮືອນ, ໂຮງຮຽນ, ຢາປົວພະຍາດ ແລະ ນ້ຳບາດານ.

### 3.14. <u>ຄວາມປອດໄພໃນການບໍລິໂພກອາຫານ</u>

ການກິນອາຫານ ແມ່ນບໍ່ຄ່ອຍຖືກຕາມຫຼັກອະນາໄມ ປະຊາຊົນມັກກິນອາຫານແບບສຸກໆດິບ ຫຼື ບາງຄັ້ງກໍດິບເລີຍເຊັ່ນ: ຊີ້ນດິບ, ປາດິບ ເປັນຕົ້ນ. ອາຫານປະເພດນີ້ແມ່ນເປັນສາເຫດທີ່ພາໃຫ້ເກີດພະຍາດແມ່ກາຝາກຊະນິດຕ່າງໆ, ພະຍາດຖອກທ້ອງໄດ້ ເຮັດໃຫ້ບໍ່ປອດໄພຕໍ່ສຸກຂະພາບຂອງຜູ້ບໍລິໂພກ ແລະ ຍັງເຮັດໃຫ້ສິ້ນເປືອງຄ່າໃຊ້ຈ່າຍນຳອີກ.

## 4. ການປ່ຽນແປງຮູບແບບການຜະລິດກະສິກຳ

### 4.1. <u>ການນຳໃຊ້ທີ່ດິນ</u>

ຈາກການສຶກສາພົບວ່າ ເນື້ອທີ່ການຜະລິດໃນໄລຍະກ່ອນ ແລະ ຫຼັງການສຳປະທານແມ່ນມີການປ່ຽນແປງໄປດັ່ງນີ້: ເນື້ອທີ່ໄຮ່ຫຼຸດລົງ 9,17% ເນື່ອງຈາກວ່າລັດ ແລະ ໂຄງການ GAPE ໄດ້ມີການຈັດສັນທີ່ດິນແບ່ງດິນແບ່ງປ່າໃຫ້ປະຊາຊົນ ແລະ ພື້ນທີ່ຈຳນວນໜຶ່ງຖືກເຂດສຳປະທານ. ເນື້ອທີ່ນາເພີ່ມຂຶ້ນ 27,41% ເພາະໄດ້ຮັບການຊ່ວຍເຫຼືອຈາກໂຄງການ ທາງດ້ານອຸປະກອນ, ແນວພັນ ແລະ ເຕັກນິກວິຊາການຈຳນວນໜຶ່ງ ແລະ ເນື້ອທີ່ສວນເພີ່ມຂຶ້ນ 75,51% ເພາະວ່າອຶດເຂົ້າແຕ່ທົ່ວປີຈຶ່ງໄດ້ປູກມັນຕົ້ນກິນແທນເຂົ້າ. ອີກບັນຫາໜຶ່ງ ແມ່ນພື້ນທີ່ເກັບເຄື່ອງປ່າຂອງ

ດິງຫຼຸດລົງ. ແຕ່ວ່າມີພໍ່ຄ້າຈຳນວນໜຶ່ງທີ່ຮັບຊື້ເພີ່ມຂຶ້ນ ເນື່ອງຈາກມີເສັ້ນທາງຄົມມະນາຄົມທີ່ສະດວກສະບາຍຂຶ້ນ ຈຶ່ງເຮັດໃຫ້ເຂົາເຈົ້າເຮັດສວນເພີ່ມຂຶ້ນ.

**ຕາຕະລາງ 10.** ສະແດງການນຳໃຊ້ທີ່ດິນ

| ລ/ດ | ປະເພດດິນ | ເນື້ອທີ່ກ່ອນສຳປະທານ (ha) | ເນື້ອທີ່ຫຼັງສຳປະທານ (ha) | ເປີເຊັນ (%) | ໝາຍເຫດ |
|---|---|---|---|---|---|
| 1 | ດິນໄຮ່ | 56,7 | 51,5 | 9,17 | ຫຼຸດລົງ |
| 2 | ດິນນາ | 7,44 | 9,48 | 27,41 | ເພີ່ມຂຶ້ນ |
| 3 | ດິນສວນ | 18,54 | 32,54 | 75,51 | ເພີ່ມຂຶ້ນ |

### 4.2. <u>ການປ່ຽນແປງຮູບແບບການປູກພືດ</u>

ໃນເມື່ອກ່ອນການປູກພືດຂອງປະຊາຊົນ ແມ່ນອາໃສທຳມະຊາດເປັນຫຼັກ ແຕ່ໃນປະຈຸບັນ ການປູກເຂົ້າໄຮ່ຂອງປະຊາຊົນ ແມ່ນມີການປ່ຽນແປງຈາກການເຮັດໄຮ່ເລື່ອນລອຍມາເປັນການເຮັດໄຮ່ໝູນວຽນ ໂດຍແມ່ນໂຄງການ GAPE ແລະ ລັດຈັດສັນໃຫ້, ຫຼັງຈາກທີ່ມີການແບ່ງດິນແບ່ງປ່າ ແລະ ໄດ້ຮັບການສົ່ງເສີມຈາກໂຄງການຕ່າງໆເປັນຕົ້ນແມ່ນໂຄງການ VFI (ໃນເມື່ອກ່ອນແມ່ນເອີ້ນວ່າ: ໂຄງການ GAPE) ທີ່ໄດ້ຊ່ວຍເຫຼືອຄື: ມອບເບັ້ຍຢາງບົງ, ກະຖິນນາລົງ, ແນວພັນເຂົ້າ ພ້ອມທັງສາທິດເຕັກນິກຕ່າງໆໃຫ້ກັບປະຊາຊົນເພື່ອເປັນການສົ່ງເສີມໃຫ້ເຂົາເຈົ້າມີລາຍຮັບ ແລະ ທັງເປັນການສະສົມທຶນໃຫ້ກັບຄອບຄົວນຳອີກ.

ຈຳນວນຄອບຄົວທີ່ເຮັດໄຮ່ມີ 60 ຄອບຄົວ, ເຮັດນາ 16 ຄອບຄົວ, ປູກມັນຕົ້ນ 24 ຄອບຄົວ, ປູກຢາງບົງ 21 ຄອບຄົວ, ປູກກະຖິນນາລົງ 23 ຄອບຄົວ, ປູກຕົ້ນກ້ວຍ 42 ຄອບຄົວ.

**ຕາຕະລາງ 11.** ສະແດງຜົນຜະລິດຕໍ່ເນື້ອທີ່ການປູກພືດຂອງປະຊາຊົນ

| ລ/ດ | ປະເພດການນຳໃຊ້ດິນ | ເນື້ອທີ່ລວມ (ha) | ຈຳນວນຄອບຄົວ | ເປີເຊັນ (%) | ຜົນລວມ (T/ປີ) | ຜົນຜະລິດສະເລ່ຍ (T/ha/ປີ) |
|---|---|---|---|---|---|---|
| 1 | ດິນໄຮ່ | 51,5 | 60 | 100 | 43,400 | 0,72 (ເຂົ້າໄຮ່) |
| 2 | ດິນນາ | 9,48 | 16 | 46,78 | 4,435 | 0,46 (ເຂົ້ານາ) |
| 3 | ດິນສວນ | 32,54 | 50 | 83,33 | 11,381 | 0,22 (ມັນຕົ້ນ) |

**ຕາຕະລາງ 12.** ສະແດງຜົນຜະລິດຕໍ່ຄອບຄົວ

| ລ/ດ | ຊະນິດພືດທີ່ປູກ | ຈຳນວນ ຄອບຄົວທີ່ປູກ | ຜົນຜະລິດ ລວມ | ຜົນຜະລິດ ສະເລ່ຍ | ຫົວໜ່ວຍ |
|---|---|---|---|---|---|
| 1 | ເຂົ້າໄຮ່ | 60 | 43.400 kg | 723,33 | kg/ຄຄ/ປີ |
| 2 | ເຂົ້ານາ | 16 | 4.435 kg | 277,18 | kg/ຄຄ/ປີ |
| 3 | ໝາກແຕງ | 43 | 1.466 kg | 24,43 | kg/ຄຄ/ປີ |
| 4 | ມັນຕົ້ນ | 24 | 11.381 kg | 189,68 | kg/ຄຄ/ປີ |
| 5 | ກ້ວຍ | 43 | 543 ຕົ້ນ | 9 | ຕົ້ນ/ຄຄ/ປີ |
| 6 | ກະຖິນນາລົງ | 23 | 5.955 ຕົ້ນ | 99 | ຕົ້ນ/ຄຄ/ປີ |
| 7 | ຢາງບົງ | 21 | 7.580 ຕົ້ນ | 126 | ຕົ້ນ/ຄຄ/ປີ |

### 4.3. ການປ່ຽນແປງຮູບແບບການລ້ຽງສັດ

ແຕ່ກ່ອນການລ້ຽງສັດຂອງປະຊາຊົນ ແມ່ນມີຄວາມສະດວກສະບາຍ ແຕ່ປະຈຸບັນໄດ້ ປ່ຽນແປງໄປຈາກຮູບແບບເດີມຄື: ປ່ຽນຈາກການລ້ຽງແບບປ່ອຍຕາມທຳມະຊາດມາເປັນການລ້ຽງ ແບບເຄິ່ງທຳມະຊາດ (ລະດູແລ້ງປ່ອຍ ແລະ ລະດູຝົນຜູກ) ຍ້ອນພື້ນທີ່ລ້ຽງຈຳກັດ, ເຮັດໃຫ້ປະຊາ ຊົນພົບຄວາມຫຍຸ້ງຍາກ, ສັດເກີດພະຍາດ, ຈຳນວນສັດຫຼຸດລົງ, ປະຊາຊົນແມ່ນບໍ່ມີຄັງລ້ຽງສັດ ແລະ ບໍ່ເຄີຍກ່ຽວຫຍ້າໃຫ້ສັດກິນ.

**ຕາຕະລາງ 13.** ສະແດງການລ້ຽງສັດ

| ລ/ດ | ປະເພດສັດລ້ຽງ | ຈຳນວນຄອບຄົວທີ່ ລ້ຽງສັດ | ຈຳນວນສັດ (ໂຕ) | ຄອບຄົວລ້ຽງສັດຄິດ ເປັນ (%) |
|---|---|---|---|---|
| 1 | ຄວາຍ | 16 | 61 | 26,67 |
| 2 | ງົວ | 18 | 72 | 30 |
| 3 | ແບ້ | 14 | 44 | 23,33 |
| 4 | ໝູ | 18 | 57 | 30 |
| 5 | ເປັດ | 13 | 20 | 21,67 |
| 6 | ໄກ່ | 36 | 305 | 60 |




**ຮູບ 2.** ສັດສ່ວນການລ້ຽງສັດຂອງປະຊາຊົນ

# ວິຈານ

ອີງໃສ່ຜົນການສຶກສາ ຊີວິດການເປັນຢູ່ຂອງປະຊາຊົນພາຍຫຼັງທີ່ມີການສຳປະທານທີ່ດິນຢູ່ທີ່ບ້ານປະຈູດອນ ແລະ ບ້ານພໍ່ເບັຍ ເມືອງຕະໂອ້ຍ ແຂວງສາລະວັນ ແມ່ນສາມາດຕີລາຄາຜົນໄດ້ຮັບໄດ້ດັ່ງນີ້:

ສະພາບພື້ນທີ່ ແມ່ນມີຄວາມຮາບພຽງໜ້ອຍ ແລະ ສູງຈາກໜ້ານ້ຳທະເລ 350 m ຂຶ້ນໄປ, ຄວາມອຸດົມສົມບູນຂອງດິນມີໜ້ອຍ ເນື່ອງຈາກໄດ້ຮັບຜົນກະທົບຈາກສົງຄາມ.

ການນຳໃຊ້ທີ່ດິນ ແມ່ນມີຄວາມສຳຄັນຫຼາຍ ເພາະວ່າດິນເປັນປັດໄຈທີ່ສຳຄັນໃນການຜະລິດກະສິກຳຂອງປະຊາຊົນ, ຜົນຜະລິດທາງດ້ານກະສິກຳແມ່ນຫຼຸດລົງ ເນື່ອງຈາກ ຄວາມອຸດົມສົມບູນຂອງລະບົບນິເວດໄດ້ຫຼຸດລົງ.

ປະຊາຊົນແມ່ນຍັງທຸກຍາກ ເນື່ອງຈາກວ່າ ດິນຟ້າອາກາດບໍ່ດີມີການປ່ຽນແປງຢູ່ເລື້ອຍໆ, ມີພະຍາດລະບາດຫຼາຍ, ດິນບໍ່ງາມເຮັດໃຫ້ພືດທີ່ປູກບໍ່ງາມ, ເຂົ້າບໍ່ກຸ້ມກິນ, ລາຍຮັບຕ່າງໆທີ່ຫາໄດ້ກໍແມ່ນໄດ້ເອົາໄປຊື້ເຂົ້າກິນບໍ່ມີໂອກາດໄດ້ເກັບສະສົມເງິນ ເພື່ອໃຫ້ກາຍເປັນທຶນ ແລະ ສ້າງລາຍຮັບເພີ່ມ, ລາຍຮັບສ່ວນໜຶ່ງ ແມ່ນໄດ້ຈາກການຂາຍເຫຼັກ, ຮັບຈ້າງ ແລະ ຂາຍເຄື່ອງປ່າຂອງດົງ ສ່ວນວ່າລາຍຮັບຈາກການຂາຍສັດ ແລະ ຜົນຜະລິດກະສິກຳອື່ນໆແມ່ນມີໜ້ອຍ.

ການສຳປະທານທີ່ດິນແມ່ນ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນພົບບັນຫາ ແລະ ອຸປະສັກຕ່າງໆໃນການດຳລົງຊີວິດ ຍ້ອນເປັນໄລຍະທີ່ກຳລັງມີການບຸກເບີກ ເຮັດໃຫ້ພື້ນທີ່ໃນການທຳມາຫາກິນຂອງປະຊາຊົນຫຼຸດລົງ, ປະຊາຊົນຈຳນວນໜຶ່ງແມ່ນບໍ່ເຫັນດີ ແລະ ບໍ່ພໍໃຈຕໍ່ກັບບຸກເບີກເນື້ອທີ່ເພື່ອປູກມັນຕົ້ນ ຍ້ອນເຂົາເຈົ້າຄິດວ່າ ມັນຈະບໍ່ເຮັດໃຫ້ຊີວິດການເປັນຢູ່ດີຂຶ້ນ ເພາະທີ່ຜ່ານມາແມ່ນເຄີຍເກີດກັບການປູກໝາກເຍົາ ແຕ່ຖ້າຫາກວ່າ ການສຳປະທານເຮັດໃຫ້ຊີວິດການເປັນຢູ່ດີຂຶ້ນປະຊາຊົນກໍຍິນດີໃຫ້ຄວາມຮ່ວມມືໃນທຸກໆດ້ານ.

ຮູບແບບການຜະລິດກະສິກຳຂອງປະຊາຊົນໃນປະຈຸບັນ ແມ່ນມີການປ່ຽນແປງໄປຈາກຮູບແບບເດີມກໍຄື: ບາງຄອບຄົວແມ່ນມີການນຳໃຊ້ແນວພັນໃໝ່ ຍົກເວັ້ນແນວພັນເຂົ້າໄຮ່, ປະຊາຊົນຈຳນວນໜຶ່ງຮູ້ນຳໃຊ້ເຕັກນິກອັນໃໝ່, ມີຄວາມຫຼາກຫຼາຍທາງດ້ານຊີວະນາໆພັນ, ເນື້ອທີ່ໄຮ່ຫຼຸດລົງ, ເນື້ອທີ່ສວນເພີ່ມຂຶ້ນ, ເນື້ອທີ່ນາເພີ່ມຂຶ້ນ, ຈຳນວນສັດລ້ຽງຫຼຸດລົງ, ພື້ນທີ່ລ້ຽງສັດຈຳກັດ, ເຂົາເຈົ້າບໍ່ສິ້ນເຄີຍກັບການການລ້ຽງສັດແບບເຄິ່ງທຳມະຊາດ.

# ສະຫຼຸບ

ຈາກການສຶກສາ ຊີວິດການເປັນຢູ່ຂອງປະຊາຊົນພາຍຫຼັງທີ່ມີການສຳປະທານທີ່ດິນຢູ່ 2 ບ້ານ ຂອງເມືອງຕະໂອ້ຍ ແຂວງສາລະວັນ ເຫັນວ່າປະຊາຊົນຍັງມີຄວາມທຸກຍາກຫຼາຍ ເນື່ອງຈາກວ່າ ອາຊີບຂອງປະຊາຊົນສ່ວນໃຫຍ່ແມ່ນເຮັດການກະສິກຳ, ເຂົາເຈົ້າຖືເອົາການເຮັດໄຮ່ເປັນຫຼັກ ແລະ ມີປະຊາຊົນຈຳນວນໜຶ່ງທີ່ເຮັດນາ, ເຮັດສວນ, ເກັບເຄື່ອງປ່າຂອງດົງ ແລະ ເກັບເຫຼັກ ເພື່ອສ້າງລາຍໄດ້ເສີມໃຫ້ແກ່ຄອບຄົວ.

ປະຊາຊົນເຂດດັ່ງກ່າວສ່ວນໃຫຍ່ກົກໜັງສື ຈຳນວນຜູ້ທີ່ບໍ່ໄດ້ຮຽນໜັງສືມີ 58%, ຈຳນວນທີ່ໄດ້ຮຽນຊັ້ນປະຖົມມີ 38%, ຈຳນວນທີ່ຮຽນຈົບຊັ້ນປະຖົມ 3% ແລະ ຈຳນວນທີ່ຈົບຊັ້ນມັດທະຍົມຕົ້ນມີ 1% ເທົ່ານັ້ນ.

ຄອບຄົວທີ່ມີໄຟຟ້າໃຊ້ 63,33%, ມີໂທລະພາບ 21,67%, ຈານຮັບສັນຍານໂທລະພາບ 15%, ມີຕູ້ເຢັນ 3,33%, ມີຕູ້ລຳໂພງ 10%, ມີຊີດີ 23,33% ແລະ ມີພັດລົມ 8,33%. ບ້ານປະຈຸດອນມີສຸກສາລາປະຈຳບ້ານ 1 ຫຼັງ ພ້ອມດ້ວຍແພດ 2 ຄົນ, ຍິງ 1 ຄົນ ແລະ ມີຮ້ານຂາຍເຄື່ອງຍ່ອຍ 6 ຮ້ານພ້ອມດ້ວຍຮ້ານສ້ອມແປງຂະໜາດນ້ອຍ 1 ຮ້ານ.

ເນື້ອທີ່ໆ ມີການສຳປະທານແມ່ນດິນປະເພດປ່າເຫຼົ່າ, ປ່າຊົມໃຊ້ຈຳນວນໜຶ່ງ, ທົ່ງຫຍ້າ ແລະ ຖືກພື້ນທີ່ທຳການຜະລິດຂອງປະຊາຊົນ 15 ຄອບຄົວ ເນື້ອທີ່ຈຳນວນ 17,41 ha (ເນື້ອທີ່ໄຮ່ຖືກດຸດ 10,02 ha, ເນື້ອທີ່ນາ 1,29 ha ແລະ ເນື້ອທີ່ສວນຖືກດຸດ 6,1 ha). ໃນນັ້ນມີ 6 ຄອບຄົວທີ່ບໍ່ພໍໃຈໃຫ້ດຸດ ເພາະເຂົາເຈົ້າໄດ້ປູກພືດຈຳນວນໜຶ່ງເຊັ່ນ: ຕົ້ນຢາງບົງ, ກະຖິນນາລົງ, ໝາກນັດ ແລະ ຕົ້ນກ້ວຍ.

ການສຳປະທານທີ່ດິນ ແມ່ນເຮັດໃຫ້ເກີດມີຄວາມຂັດແຍ່ງລະຫວ່າງປະຊາຊົນກັບ ບໍລິສັດ ຍ້ອນເຂົາເຈົ້າຖືກໂກງແຮງງານບໍ່ໄດ້ຮັບຄ່າແຮງງານຕາມທີ່ສັນຍາ ແລະ ມີຄວາມຫຍຸ້ງຍາກ, ມີພື້ນທີ່ຈຳກັດໃນການຜະລິດ, ການລ້ຽງສັດພົບຄວາມຫຍຸ້ງຍາກ, ການເກັບເຄື່ອງປ່າຂອງດົງ ແລະ ການຫາສັດນ້ຳຕ່າງໆແມ່ນຫາໄດ້ໜ້ອຍ.

ການລ້ຽງສັດແມ່ນລ້ຽງແບບທຳມະຊາດ (ແບບປ່ອຍ) ຂາດເຕັກນິກໃນການຈັດການ, ບໍ່ມີການສັກຢາປ້ອງກັນພະຍາດ ເຮັດໃຫ້ສັດຕາຍຫຼາຍໃນແຕ່ລະປີ, 87,35% ຍັງບໍ່ທັນເຂົ້າໃຈເຖິງເຕັກນິກໃນການລ້ຽງສັດທີ່ຖືກຕ້ອງ.

ລາຍຮັບຂອງການປູກເຂົ້າສະເລ່ຍມີ: 1.993.125 ກີບ/ຄອບຄົວ/ປີ, ໄດ້ຈາກການຂາຍສັດລ້ຽງສະເລ່ຍມີ: 691,633 ກີບ/ຄອບຄົວ/ປີ, ໄດ້ຈາກການຮັບຈ້າງສະເລ່ຍມີ: 834.625 ກີບ/ຄອບຄົວ/ປີ, ລາຍຮັບຈາກການຂາຍເຄື່ອງປ່າຂອງດົງສະເລ່ຍມີ: 78.758 ກີບ/ຄອບຄົວ/ປີ ແລະ ລາຍຮັບອື່ນໆສະເລ່ຍມີ: 507.416 ກີບ/ຄອບຄົວ, ສ່ວນລາຍຮັບສະເລ່ຍຕໍ່ຫົວຄົນແມ່ນມີ: 331.233 ກີບ/ຄົນ/ປີ. ການສຳປະທານທີ່ດິນຂອງ ບໍລິສັດເພັດດາລາການກະເສດຄົບວົງຈອນ ແມ່ນໄດ້ດຳ

ເປີນມາຕັ້ງແຕ່ປີ 2006, ອາຍຸການສຳປະທານ 50 ປີ, ເນື້ອທີ່ສຳປະທານ 1.000 ha, ການສຳປະທານເຮັດໃຫ້ເນື້ອທີ່ໄຮ່ຫຼຸດລົງ 9,17%, ແຕ່ວ່າເນື້ອທີ່ນາເພີ່ມຂຶ້ນ 27,41% ແລະ ເນື້ອທີ່ສວນເພີ່ມຂຶ້ນ 75,51%, ການສຳປະທານເຮັດໃຫ້ສະພາບແວດລ້ອມມີການປ່ຽນແປງຄື: ນ້ຳທຳມະຊາດບົກແຫ້ງເຖິງ 51,66%, ເກີດມີໄພແຫ້ງແລ້ງ 30%, ມີໄຟໄໝ້ປ່າ 6,66%, ມີນ້ຳຖ້ວມເຖິງ 70%, ເກີດມີລົມພາຍຸ 68,33% ແລະ ສະພາບອາກາດມີການປ່ຽນແປງເຖິງ 80%.

ການປູກພືດຂອງປະຊາຊົນເຂດດັ່ງກ່າວ ແມ່ນອາໄສທຳມະຊາດເປັນຫຼັກ, ຂາດຄວາມຮູ້ທາງດ້ານເຕັກນິກວິຊາການ, ໃຊ້ແນວພັນພື້ນເມືອງ, ມີວັດສະພືດເກີດຂຶ້ນຫຼາຍ, ການປັບປຸງດິນມີໜ້ອຍ, ໃຊ້ເຕັກນິກແບບດັ້ງເດີມ ເຮັດໃຫ້ຜົນຜະລິດຕົກຕ່ຳ. ປະຊາຊົນຂາດເຂົ້າກິນແຕ່ຕົ້ນປີເຊັ່ນວ່າ: ເຂົ້າກຸ້ມກິນ 1 - 3 ເດືອນ ມີ 58%, ເຂົ້າກຸ້ມກິນ 4 - 7 ເດືອນ ມີ 31,67% ແລະ ເຂົ້າກຸ້ມກິນຫຼາຍກວ່າ 7 ເດືອນ ມີ 10%.

ການເຮັດໄຮ່ຂອງຊາວກະສິກອນ ແມ່ນມີການປ່ຽນແປງຈາກການເຮັດໄຮ່ແບບເລື່ອນລອຍມາເຮັດໄຮ່ໝູນວຽນຕາມທີ່ລັດ ແລະ ໂຄງການ GAPE ໄດ້ຈັດສັນໃຫ້, ສະມັດຕະພາບເຂົ້າໄຮ່ແມ່ນ 0,72 T/ha/ປີ ແລະ ເຂົ້ານາແມ່ນ 0,46 T/ha/ປີ.

56,66% ເຫັນວ່າສັດປ່າຫຼຸດລົງຫຼາຍ, 40% ເຫັນວ່າສັດປ່າຍັງມີຫຼາຍ, 3,34% ເຫັນວ່າສັດປ່າເກືອບບໍ່ມີເລີຍ ແລະ 90% ທີ່ເວົ້າວ່າສັດນ້ຳຫຼຸດລົງຫຼາຍ, 5% ທີ່ບອກວ່າສັດນ້ຳຍັງມີຫຼາຍ ແລະ 5% ທີ່ບອກວ່າສັດນ້ຳເກືອບບໍ່ມີເລີຍ, ຈາກການສຶກສາເຫັນວ່າປະຊາຊົນອຶດເຂົ້າເພີ່ມຂຶ້ນ, ສັດລ້ຽງຫຼຸດລົງ ເນື່ອງຈາກວ່າທົ່ງຫຍ້າລ້ຽງສັດຫຼຸດລົງ ແລະ ບໍ່ມີການປັບປຸງ.

# ຂໍ້ແນະນຳໃນການວິໄຈຄັ້ງຕໍ່ໄປ

ຈາກການສຶກສາໃນຄັ້ງນີ້ ສາມາດຖອດຖອນບົດຮຽນ ແລະ ໃຫ້ຂໍ້ແນະນຳໄດ້ດັ່ງນີ້: ການສຶກສາແມ່ນໃຊ້ເວລາສັ້ນເກີນໄປ, ສິ່ງອຳນວຍຄວາມສະດວກໃນການລົງເກັບກຳຂໍ້ມູນແມ່ນຍັງບໍ່ທັນພຽງພໍ, ເຂດທີ່ລົງສຶກສາຍັງເປັນບ່ອນທີ່ມີການສຳປະທານໃໝ່, ຍັງເປັນບ່ອນທີ່ມີການບຸກເບີກໃໝ່, ຜົນກະທົບຂອງການສຳປະທານແມ່ນຍັງມີໜ້ອຍ.

ຄວນມີການວິໄຈ ກ່ຽວກັບການຜະລິດຂອງບໍລິສັດກັບປະຊາຊົນວ່າ: ມີຄວາມຂັດແຍ້ງກັນຫຼື ບໍ່ ທາງດ້ານການປູກພືດ, ການລ້ຽງສັດ ແລະ ສິດຜົນປະໂຫຍດຕ່າງໆ ເພື່ອຈະມີທິດທາງໃນການແກ້ໄຂບັນຫາທີ່ເກີດຂຶ້ນ.

ຄວນມີພະນັກງານທີ່ໄດ້ພາສາທ້ອງຖິ່ນລົງຕິດຕາມຢ່າງເໝາະສົມ ເພື່ອໃຫ້ໄດ້ຂໍ້ມູນທີ່ຊັດເຈນ ເພາະການປາກເວົ້າ ແລະ ການສື່ສານແມ່ນຂ້ອນຂ້າງເຂົ້າໃຈຍາກ, ຮີດຄອງປະເພນີແມ່ນແຕກຕ່າງກັນຫຼາຍກັບຊົນເຜົ່າລາວລຸ່ມ.

ຄວນມີການສົ່ງເສີມການຜະລິດກະສິກຳແບບເຍີນຍົງ ເພື່ອຮັກສາສະພາບແວດລ້ອມ, ລະບົບນິເວດໃຫ້ມີຄວາມເຍີນຍົງ ແລະ ເຮັດໃຫ້ຊີວິດການເປັນຢູ່ຂອງປະຊາຊົນມີຄວາມຍືນຍົງ.

# ເອກະສານອ້າງອີງ

ຄຳພັນ ແກ້ວວິໄລສັກ, ສະມາຄົມໂລກ ເພື່ອປະຊາກອນ ແລະ ສິ່ງແວດລ້ອມ (GAPE) "ການປ່ຽນແປງຂອງໝູ່ບ້ານຢູ່ພາກໃຕ້ຂອງລາວ - ການສຳປະທານທີ່ດິນ ແລະ ການຫັນປ່ຽນຂອງຊຸມຊົນ" (http://www.laolandissues.org/presentation.html), ວັນທີ 4 ມັງກອນ 2011.

ເທບພະລິດ ແລະ ສຸພາລັກ, 2010 "ສຶກສາຜົນກະທົບການສຳປະທານທີ່ດິນຕໍ່ການກະສິກຳ ແລະ ການດຳລົງຊີວິດຂອງປະຊາຊົນບ້ານປະຈູໃຕ້, ປະຈູເຈີນ ເມືອງຕະໂອ້ຍ ແຂວງສາລະວັນ" ບົດໂຄງການຈົບຊັ້ນ.

ລໍເຣັນ ໂຣມາກນີ, ອົງການຕ້ານໄພອຶດຫິວຂອງປະເທດຝຣັ່ງ (ACF) "ວິວັດທະນາການຂອງການດຳລົງຊີວິດຂອງປະຊາຊົນເຂດເມືອງລອງກັບການພັດທະນາກະສິກຳເປັນສິນຄ້າ" (http:-//www.lao landissues.org/presentation.html), ວັນທີ 4 ມັງກອນ 2011.

ອາຄົມ ຕຸນາລົມ, 2007 "ການນຳໃຊ້ທີ່ດິນ, ຊັບພະຍາກອນທຳມະຊາດ ແລະ ປົກປັກຮັກສາສິ່ງແວດລ້ອມຢູ່ໃນເຂດຊົນນະບົດຂອງ ສປປ ລາວ (http://www.lao landissues.org/pr-esentation.html), ວັນທີ 4 ມັງກອນ 2011.

ອົງການ JICA "ຊີວິດການເປັນຢູ່ບ້ານໆເຫຼົ່າ ພາຍໃຕ້ໂຮງງານຊີມັງລາວແຂວງຄຳມ່ວນ" (http://-www.laolandissues.org/presentation.html), ວັນທີ 4 ມັງກອນ 2011.

Khao lao - ຂ່າວລາວ "ລັດອະນຸຍາດໃຫ້ເອກະຊົນສຳປະທານທີ່ດິນປູກໄມ້ວິກ 812 ha ຢູ່ເມືອງຕະໂອ້ຍ" (http://www.vimalao.de/laos/?p=3188), ວັນທີ 6 ມັງ ກອນ 2011.

Maslow "ລະດັບຂັ້ນຄວາມຕ້ອງການຂອງມະນຸດ" (http://www.kmitnbxmie8.com/index.php?lay=show&ac=article&Id=5354814&Ntype=3,downloaded date: 27/03/2011.

Miles. Kenney_Lazar, 2010 "ການສຳປະທານທີ່ດິນ ຢູ່ແຂວງອັດຕະປື, ສປປ ລາວ", ວັນທີ 6 ມັງກອນ 2011.

# ເອກະສານຊ້ອນທ້າຍ



**ຮູບຊ້ອນທ້າຍ 1.** ການນຳໃຊ້ນ້ຳຂອງປະຊາຊົນ



**ຮູບຊ້ອນທ້າຍ 2.** ຂ່າປ່າທີ່ສາມາດສ້າງລາຍຮັບໃຫ້ປະຊາຊົນ



**ຮູບຊ້ອນທ້າຍ 3.** ການຮຽນໜັງສືຂອງເດັກນ້ອຍ



**ຮູບຊ້ອນທ້າຍ 4.** ອາຫານເສີມທີ່ໄດ້ຮັບການຊ່ວຍເຫຼືອຈາກໂຄງການ GAPE




**ຮູບຊ້ອນທ້າຍ 5.** ເຄື່ອງຈັກສານ ແລະ ການຕ່ຳຫູກຂອງຊາວບ້ານ



**ຮູບຊ້ອນທ້າຍ 6.** ໂຮງຮຽນ ແລະ ສຸກສາລາປະຈຳ ບ້ານປະຈຸດອນ




**ຮູບຊ້ອນທ້າຍ 7.** ເຮືອນຂອງປະຊາຊົນ




**ຮູບຊ້ອນທ້າຍ 8.** ດິນທີ່ກຳລັງບຸກເບີກ ແລະ ສວນມັນຕົ້ນຂອງບໍລິສັດເພັດດາລາ




**ຮູບຊ້ອນທ້າຍ 9.** ພື້ນທີ່ປູກເຂົ້າໄຮ່ຂອງປະຊາຊົນ ແລະ ພື້ນທີ່ສຳປະທານ




**ຮູບຊ້ອນທ້າຍ 10.** ການຕັດຟືນຂອງປະຊາຊົນ ແລະ ປ່າໄມ້ໄລ່




**ຮູບຊ້ອນທ້າຍ 11.** ສວນກ້ວຍຂອງປະຊາຊົນ ແລະ ແຫຼ່ງນ້ຳທຳມະຊາດ



**ຮູບຊ້ອນທ້າຍ 12.** ສັດລ້ຽງຂອງປະຊາຊົນ




**ຮູບຊ້ອນທ້າຍ 13.** ແຜນວາດເຂດອະນຸລັກປາ - ກົບໜອງເຈມ




**ຮູບຊ້ອນທ້າຍ 14.** ແຜນທີ່ການນຳໃຊ້ດິນ ແລະ ປ່າໄມ້ ບ້ານປະຈູດອນ




**ຮູບຊ້ອນທ້າຍ 15.** ການສຳພາດ ແລະ ການລົງຢ້ຽມຢາມປະຊາຊົນ



**ຮູບຊ້ອນທ້າຍ 16.** ແຜນທີ່ຈັດສັນທີ່ດິນ ບ້ານປະຈູດອນ ແລະ ບ້ານພໍ່ເບີຍ

ແບບຟອມສຳພາດຊີວິດການເປັນຢູ່ຂອງປະຊາຊົນພາຍຫຼັງການສຳປະທານທີ່ດິນ

- **ຂໍ້ມູນກ່ຽວກັບຜູ້ສອບຖາມ**

ຊື່ແລະນາມສະກຸນ: ທ້າວ/ນາງ.........................................ວັນທີ........ເດືອນ.........ປີ..........ເວລາ..................

## I. ຂໍ້ມູນສ່ວນຕົວຂອງຜູ້ຖືກສຳພາດ

ຊື່ ແລະ ນາມສະກຸນ: ທ້າວ/ນາງ....................................ບ້ານ........................ອາຍຸ............................

ເມືອງ..............................., ແຂວງ.........................................................................................

1. ສະຖານະພາບ: ໂສດ (....), ແຕ່ງງານ (....), ຮ້າງ (....), ໝ້າຍ (....).
2. ຜູ້ຕອບຄຳຖາມເປັນຫົວໜ້າຄອບຄົວ ແມ່ນ (....), ບໍ່ແມ່ນ (....).

## II. ຂໍ້ມູນຂອງສະມາຊິກໃນຄອບຄົວ.

- ໃນຄອບຄົວມີສະມາຊິກຈັກ............ຄົນ, ຍິງ..............ຄົນ, ເມຍຈັກຄົນ?............,ລູກຈັກຄົນ?................
- ມີເດັກເກີດໃໝ່ບໍ່? ມີ(....), ບໍ່ມີ (....), ຜູ້ເສຍຊີວິດ? ມີ (....), ບໍ່ມີ (....).

| ລ/ດ | ລາຍຊື່ | ອາຍຸ | ອາຊີບ | | ລະດັບການສຶກສາ | ສາສະໜາ |
|---|---|---|---|---|---|---|
| | | | ຕົ້ນຕໍ | ສຳຮອງ | | |
| 1 | | | | | | |
| 2 | | | | | | |
| 3 | | | | | | |
| 4 | | | | | | |
| 5 | | | | | | |
| 6 | | | | | | |

## III. ສາທາລະນຸປະໂພກ

1. ໄຟຟ້າ:ໄດ້ເອົາໄຟຟ້າເຂົ້າເຮືອນບໍ່? (..), ແຕ່ປີໃດ?..............................................................................

| ເຄື່ອງໃຊ້ໄຟຟ້າ | ກ່ອນ | ຫຼັງ | ລາຄາຊື້ | ປີຊື້ |
|---|---|---|---|---|
| ໂທລະທັດ | | | | |
| ຈານຮັບສັນຍານ | | | | |
| ຊີດີ | | | | |
| ຕູ້ລຳໂພງ | | | | |
| ວິທະຍຸ | | | | |
| ພັດລົມ | | | | |
| ຕູ້ເຢັນ | | | | |

2. ໂຮງໝໍ ຫຼື ສຸກສາລາ

| | ກ່ອນການສຳປະທານ | ຫຼັງການສຳປະທານ |
|---|---|---|
| ມີໂຮງໝໍ | | |
| ເຂົ້າໂຮງໝໍ (ຄັ້ງ/ປີ) | | |
| ເສຍເງິນຄ່າປິ່ນປົວ (ກີບ/ຄັ້ງ) | | |
| ໃຜຊ່ວຍເຫຼືອ | | |
| ເວລາເຈັບປ່ວຍ | | |

ກ່ອນທີ່ບໍ່ມີສຸກສາລາປິ່ນປົວກັນແບບໃດ?..............................................ປະຈຸບັນຄືເກົ່າບໍ່ (..).

3. ເຮືອນ

| | ກ່ອນການສຳປະທານ | ຫຼັງການສຳປະທານ |
|---|---|---|
| ຈຳນວນຫຼັງຄາ | | |
| ລັກສະນະຂອງຫຼັງຄາ | | |
| ວັດສະດຸທີ່ໃຊ້ເອົາມາຈາກໃສ | | |
| ຫຼັງຄາມຸງດ້ວຍ | | |
| ຝາແອ້ມດ້ວຍ | | |
| ພື້ນປູດ້ວຍ | | |
| ເນື້ອທີ່ ($m^2$) | | |
| ປະເພດ (ຊົ່ວຄາວ,ຖາວອນ) | | |
| ເຮືອນຄົວ (ເຮືອນໄຟ) | | |
| ວິດຖ່າຍ (ຫ້ອງນ້ຳ) | | |

4. ພາຫະນະຮັບໃຊ້ຄອບຄົວ

| ລາຍການ | ຈຳນວນ (ຄັນ) | ປີຊື້ | ລາຄາຊື້ | ບ່ອນຊື້ |
|---|---|---|---|---|
| ລົດໄຖ | | | | |
| ລົດຈັກ | | | | |
| ລົດຖີບ | | | | |

# IV. ດ້ານການລ້ຽງສັດ

1. ສັດໃຫຍ່

| ສັດໃຫຍ່ | ກ່ອນການສຳປະທານ | | | | ຫຼັງການສຳປະທານ | | | |
|---|---|---|---|---|---|---|---|---|
| | ຄວາຍ | ງົວ | ແບ້ | ໝູ | ຄວາຍ | ງົວ | ແບ້ | ໝູ |
| ຈຳນວນສັດທັງໝົດ (ໂຕ) | | | | | | | | |
| ຈຳນວນສັດທີ່ເກີດ (ໂຕ) | | | | | | | | |
| ຈຳນວນສັດທີ່ຕາຍ (ໂຕ) | | | | | | | | |
| ຈຳນວນສັດທີ່ຍັງເຫຼືອ (ໂຕ) | | | | | | | | |

| | | | | | | | | |
|---|---|---|---|---|---|---|---|---|
| ສັດເກີດພະຍາດ | | | | | | | | |
| ການສັກຢາສັດ | | | | | | | | |
| ວິທີການລ້ຽງ | | | | | | | | |
| ອາຫານທີ່ໃຫ້ | | | | | | | | |
| ສະຖານທີ່ລ້ຽງ | | | | | | | | |
| ຄອກສັດ | | | | | | | | |
| ບັນຫາ | | | | | | | | |

<u>ໝາຍເຫດ:</u> 1=ລ້ຽງແບບທຳມະຊາດ, 2=ລ້ຽງແບບເຄິ່ງທຳມະຊາດ, 3=ລ້ຽງແບບຂັງ

2. ສັດປີກ

| ສັດປີກ | ກ່ອນການສຳປະທານ | | ຫຼັງການສຳປະທານ | |
|---|---|---|---|---|
| | ເປັດ | ໄກ່ | ເປັດ | ໄກ່ |
| ຈຳນວນສັດລ້ຽງ | | | | |
| ຈຳນວນສັດທີ່ເກີດ | | | | |
| ຈຳນວນສັດທີ່ຕາຍ | | | | |
| ຈຳນວນສັດທີ່ຍັງເຫຼືອ | | | | |
| ສັກຢາ | | | | |
| ພະຍາດ | | | | |
| ສະຖານທີ່ລ້ຽງ | | | | |
| ຄອກສັດ | | | | |
| ອາຫານສັດ | | | | |
| ບັນຫາ | | | | |

## V. ການນຳໃຊ້ນ້ຳ

| ປະນ້ຳທີ່ໃຊ້ | ກ່ອນ | | ຫຼັງ | |
|---|---|---|---|---|
| | ນ້ຳກິນ | ນ້ຳໃຊ້ | ນ້ຳກິນ | ນ້ຳໃຊ້ |
| ນ້ຳບາດານ | | | | |
| ນ້ຳຫ້ວຍ, ເຊ | | | | |
| ນ້ຳສ້າງ | | | | |
| ນ້ຳຝົນ | | | | |

## VI. ສະພາບແວດລ້ອມ

1. ແຫຼ່ງນ້ຳທຳມະຊາດ

| | ກ່ອນການສຳປະທານ | | | ຫຼັງການສຳປະທານ | | |
|---|---|---|---|---|---|---|
| | ບົກໄວ | ບົກຊ້າ | ບໍ່ບົກ | ບົກໄວ | ບົກຊ້າ | ບໍ່ບົກ |
| ນ້ຳຫ້ວຍ, ເຊ | | | | | | |
| ນ້ຳບາດານ | | | | | | |

2. ໄພທຳມະຊາດ

| | ກ່ອນ | ຫຼັງ |
|---|---|---|
| ແຫ້ງແລ້ງ | | |
| ນ້ຳຖ້ວມ | | |
| ໄຟໄໝ້ປ່າ | | |
| ລົມພະຍຸ | | |

3. ສະພາບອາກາດ

| | ກ່ອນສຳປະທານ | ຫຼັງສຳປະທານ |
|---|---|---|
| ຮ້ອນ | | |
| ໜາວ | | |
| ທຳມະດາ (ປົກກະຕິ) | | |

4. ການປູກພືດ

| ກ່ອນການສຳປະທານ | | | | | |
|---|---|---|---|---|---|
| ຊະນິດພືດ | ເນື້ອທີ່ | ແນວພັນ | ຜົນຜະລິດ | ແມງໄມ້, ສັດ | ບັນຫາ |
| ເຂົ້າໄຮ່ | | | | | |
| ເຂົ້ານາ | | | | | |
| ມັນຕົ້ນ | | | | | |
| ຜັກ | | | | | |
| ຢາງພາລາ | | | | | |
| ຢາງບົງ | | | | | |
| ກ້ວຍ | | | | | |
| ຖົ່ວ,ແຕງ | | | | | |

| ຫຼັງການສຳປະຫານ | | | | | |
|---|---|---|---|---|---|
| ຊະນິດພືດ | ເນື້ອທີ່ | ແນວພັນ | ຜົນຜະລິດ | ແມງໄມ້, ສັດ | ບັນຫາ |
| ເຂົ້າໄຮ່ | | | | | |
| ເຂົ້ານາ | | | | | |
| ມັນຕົ້ນ | | | | | |
| ຜັກ | | | | | |
| ຢາງພາລາ | | | | | |
| ຢາງບົງ | | | | | |
| ກ້ວຍ | | | | | |
| ຖົ່ວ,ແຕງ | | | | | |

5. ດ້ານຄວາມປອດໄພ

| | ກ່ອນການສຳປະຫານ | ຫຼັງການສຳປະຫານ |
|---|---|---|
| ຂີ້ລັກ | | |
| ປຸ້ນ, ຈີ້ | | |
| ອາລະວາດຕີກັນ | | |

6. ການເຂົ້າອອກຂອງຄົນ

| | ກ່ອນການສຳປະຫານ | ຫຼັງການສຳປະຫານ |
|---|---|---|
| ຄົນຕ່າງປະເທດ | | |
| ຄົນຕ່າງແຂວງ | | |
| ຄົນຕ່າງເມືອງ | | |
| ຄົນຕ່າງບ້ານ | | |

7. ອາຫານ

| ເຄື່ອງປ່າຂອງດົງ | ກ່ອນການສຳປະຫານ | | | | ຫຼັງການສຳປະຫານ | | | |
|---|---|---|---|---|---|---|---|---|
| | ເນື້ອທີ່ | ໄລຍະທາງ | ຊະນິດ | ປ/ມທີ່ຫາໄດ້ | ເນື້ອທີ່ | ໄລຍະທາງ | ຊະນິດ | ປ/ມທີ່ຫາໄດ້ |
| ສັດປ່າ (ຫຼາຍ,ໜ້ອຍ) | | | | | | | | |
| ປະເພດສັດປ່າ | | | | | | | | |
| ສັດນ້ຳ (ຫຼາຍ,ໜ້ອຍ) | | | | | | | | |
| ເຄື່ອງມືໃນການລ່າສັດ | | | | | | | | |
| ຜັກປ່າ (ຫຼາຍ,ໜ້ອຍ) | | | | | | | | |

8. ເຂົ້າກິນ

| | ກ່ອນການສຳປະທານ | ຫຼັງການສຳປະທານ |
|---|---|---|
| ເຂົ້າບໍ່ກຸ້ມກິນຈັກເດືອນ | | |
| ເວລາອຶດເຂົ້າກິນຫຍັງແທນ | | |
| ຈຳນວນຄາບເຂົ້າ (ຄາບ/ມື້) | | |
| ອາຫານສ່ວນໃຫຍ່ທີ່ກິນກັບເຂົ້າ | | |
| ຊື້ເຂົ້າກິນ (ກີບ/ປີ) | | |
| ເອົາເງິນຈາກໃສຊື້ເຂົ້າ | | |
| ໄລຍະເວລາທີ່ເຂົ້າບໍ່ກຸ້ມກິນ | | |
| ໃຜເປັນຜູ້ຊ່ວຍເຫຼືອເວລາຂາດເຂົ້າກິນ | | |

9. ຄວາມເປັນອິດສະຫຼະພາບ

| | ກ່ອນການສຳປະທານ | ຫຼັງການສຳປະທານ |
|---|---|---|
| ຄວາມມຸ້ງຫວັງ (ຄວາມຕ້ອງການ) | | |
| ການພົບປະສ້າງສັນ | | |
| ການພົວພັນກັບໂລກພາຍນອກ | | |
| ຄວາມຮູ້ສຶກສະບາຍ | | |

10. ບົດບາດຍິງຊາຍ

| | ກ່ອນການສຳປະທານ | ຫຼັງການສຳປະທານ |
|---|---|---|
| ການແຕ່ງງານ | | |
| ຜູ້ຊາຍສາມາດເອົາເມຍໄດ້ຈັກຄົນ | | |

11. ເຄື່ອງນຸ່ງຮົ່ມ

| ເຄື່ອງນຸ່ງ | ກ່ອນສຳປະທານ | | ຫຼັງສຳປະທານ | |
|---|---|---|---|---|
| | ຈ/ນ (ໂຕ/ປີ) | ລາຄາ (ກີບ/ໂຕ) | ຈ/ນ (ໂຕ/ປີ) | ລາຄາ (ກີບ/ໂຕ) |
| ໂສ້ງ | | | | |
| ເສື້ອ | | | | |
| ຜ້າຮົ່ມ | | | | |
| ເສື່ອ | | | | |
| ສາດ | | | | |
| ມຸ້ງ | | | | |

12. ຮີດຄອງປະເພນີ

| | ກ່ອນສຳປະທານ | ຫຼັງສຳປະທານ |
|---|---|---|
| ບຸນປະເພນີ (ຄັ້ງ/ປີ) | | |
| ຈຳນວນເງິນທີ່ໃຊ້ໃນການຈັດ (ກີບ/ຄັ້ງ) | | |
| ຈັດໃນຊ່ວງເດືອນ | | |
| ການເກີດລູກ | | |
| ການຕາຍ | | |

13. ດິນທີ່ຖືກດຸດ

| | ດຸດ | ບໍ່ດຸດ | ເນື້ອທີ່ | ປີທີ່ຖືກດຸດ | ຄ່າຊົດເຊີຍ |
|---|---|---|---|---|---|
| ດິນນາ | | | | | |
| ດິນສວນ | | | | | |
| ດິນປຸກສ້າງ | | | | | |
| ດິນໄຮ່ | | | | | |
| ດິນລວມບ້ານ | | | | | |